<u>ຄະນະຜູ້ຈັດທໍາ ຄໍາແນະນໍາສໍາລັບຄຣູສອນ</u>

Copyright © 2004 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ.  ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄໍາຮ້ອງຂໍອະນຸຍາດເສັຽກ່ອນ.  ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຣຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທໍາອິດ:  ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1-3
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 4-6
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lesson 4-6
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 8- 0, Easter Lesson
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 8-10 Easter Lesson
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 7, 11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson  7, 11-13
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດແນະນຳສຳລັບຄຣູສອນ
# ບົດຮຽນທີ 1
# ເວລາທຸກສິ່ງຫາກບໍ່ເປັນໄປຕາມສົມຄວນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ໂຢຊວຍ ບົດທີ 1
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ໂຢຊວຍ ບົດທີ 1
ຈຸດສຳຄັນຂອງບົດຮຽນນີ້: ພຣະອົງຊົງຮຽກຮ້ອງໃຫ້ມີຄວາມຮັບຜິດຊອບການປ່ຽນແປງ ໃນການປະພຶດປະຕິບັດດ້ວຍຄວາມກ້າຫານ, ຈົ່ງຄິດວ່າພຣະເຈົ້າຊົງສະຖິດຢູ່ນຳພວກເຮົາ
ຄຳຖາມເພື່ອສຳຣວດ: ທ່ານຮູ້ສຶກຢ່າງໃດ ກ່ຽວກັບການປ່ຽນແປງນີ້?
ຈຸດປະສົງຂອງບົດຮຽນ: ເພື່ອຊີ້ໃຫ້ເຫັນໃນແນວທາງທີ່ດີ ຂອງການປ່ຽນແປງອີງໃສ່ປະສົບການຂອງໂຢຊວຍ.

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ກ່ອນຈະເລີ້ມສອນ, ໃຫ້ຂຽນສິ່ງເຫລົ່ານີ້ລົງໃສ່ກະດານ "ພຣະເຈົ້າຊົງຮຽກຮ້ອງໃຫ້ເຮົາມີຄວາມກ້າຫານທີ່ຈະປ່ຽນແປງການກະທຳ, ຈຳໄວ້ວ່າພຣະເຈົ້າຢູ່ກັບເຮົາ"

2. ໃນເຈັ້ຽບົດຮຽນໃຫ້ອ່ານຄຳນຳແລ້ວອະທິບາຍສັ້ນໆ. ຫລັງຈາກນັ້ນໃຫ້ອ່ານຈຸດສຳຄັນຂອງບົດຮຽນນີ້.

3. ຕັ້ງຄຳຖາມງນັກຮຽນວ່າ: ໃນໂລກປັດຈຸບັນນີ້ພວກເຮົາເຫັນການປ່ຽນແປງອັນໃດແດ່? ເວລານັກຮຽນຕອບນັ້ນໃຫ້ຄຣູຂຽນລົງໃສ່ກະດານ. ຕໍ່ມາໃຫ້ນຳພານັກຮຽນອະທິຖານເພື່ອໃຫ້ເຂົ້າໃນການປ່ຽນແປງນີ້.

### ນຳພາສຶກສາພຣະຄັມພີ

4. ຂຽນຫົວຂໍ້ ບົດຮຽນໃສ່ໃນກະດານ :
   (ກ) ຄຳສັ່ງໃຫມ່ຂອງຜູ້ນຳຄົນໃຫມ່ (1:1-4)
   (ຂ) ການຫນູນໃຈຜູ້ນຳຄົນໃຫມ່ (1:5-9)
   (ຄ) ໂຢຊວຍເຊື່ອຟັງພຣະເຈົ້າ (1:10-15)
   (ງ) ປະຊາຊົນທັງຫລາຍຮັບຮູ້ຜູ້ນຳໃຫມ່ຂອງພວກເຂົາ (1:16-18)

5. ໃຫ້ນັກຮຽນສມັກໃຈອ່ານຄົນນຶ່ງອ່ານ ໂຢຊວຍ 1:1-4 ດັງໆ. ຫລັງຈາກນັກຮຽນອ່ານແລ້ວຄຣູຈະອະທິບາຍ ແລະວັກສຸດທ້າຍຂອງເຈັ້ຽບົດຮຽນ ໄດ້ບອກໄວ້ວ່າໄດ້ມີການປ່ຽນແປງຜູ້ນຳພາໃຫມ່.

6. ອ່ານ ໂຢຊວຍ 1:5-9 ແລ້ວອະທິບາຍເຖິງການຫນູນໃນຂອງພຣະເຈົ້າຕໍ່ຜູ້ນຳໃຫມ່ ທັງຫມົດນີ້ໃຫ້ອີງໃສ່ເຈັ້ຍບົດຮຽນ. ໃຫ້ນັກຮຽນປະກອບສ່ວນໄປດ້ວຍຖ້າພໍເປັນໄປໄດ້.

7. ອ່ານໂຢຊວຍ 1:10-15 ຄຣູຈະອະທິບາຍເຖິງການເຊື່ອຟັງ. ເວລາປະເຊີນກັບບັນຫາທີ່ຍິ່ງໃຫຍ່, ບັນຫາທີ່ບໍ່ສາມາດເຫັນດ້ວຍຕາໄດ້ເຮົາຈະມີປະຕິກິຣິຍາຢ່າງໃດ?

8. ອ່ານໂຢຊວຍ 1:16-18 ອີງໃສ່ເຈົ້ຽບົດຣຽນ, ຫລັງຈາກນັ້ນຄຣູຈະວາງຄຳຖາມ ຖາມເຖິງຄວາມເປັນອັນນຶ່ງອັນດຽວກັນ. ຄວາມເປັນອັນນຶ່ງອັນດຽວກັນແມ່ນຫຍັງ? ໃຫ້ນັກຮຽນຕອບແຕ່ລະຄົນ......

## ນຳໃຊ້ໃນຊີວິດປະຈຳວັນ

9. ຖ້າຈະເວົ້າເຣື່ອງການປ່ຽນແປງ ແມ່ນຫຍັງທີ່ທ້າທາຍໃຫ້ຄຣິສຕະຈັກຂອງພວກເຮົາປ່ຽນແປງແດ່?
ໃຫ້ນັກຮຽນເວົ້າມາຜູ້ລະອັນ. ຫລັງຈາກນັ້ນໃຫ້ອ່ານ ໂຢຊວຍ 1:9 ໃຫ້ດັງໆ.
ທ້າທາຍຫ້ອງຮຽນໃຫ້ຊອກຫາທາງບອກ ທີ່ຈະປ່ຽນແປງໃຫ້ຄຣິສຕະຈັກກ້າວໜ້າ.

10. ໂຢຊວຍເປັນຜູ້ນຳທີ່ເຮົາຄວນຈະຍຶດຖືເປັນແບບຢ່າງຫລືບໍ່?

ສຈ. ບຸນໂຮມ ພົມມະຈັນ

## ບົດແນະນຳສຳລັບຄຣູສອນ

## ບົດຮຽນທີ 2

## ພຣະເຈົ້າແລະຄົນທີ່ມີຈຸດອ່ອນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ໂຢຊວຍ 2:1-14; 6:22-25

ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ໂຢຊວຍ 2:1-14; 5:13--6:27

ຈຸດສຳຄັນຂອງບົດຮຽນນີ້: ພຣະເຈົ້າໃຊ້ຄົນທີ່ມີຈຸດອ່ອນ ແລະຜູ້ທີ່ຄົນອື່ນເຫັນວ່າຕ່ຳ

ຄຳຖາມເພື່ອສຳຣວດ: ແມ່ນຫຍັງທີ່ເຮັດໃຫ້ພຣະເຈົ້າຊົງຢາກໃຊ້ຄົນທີ່ມີຈຸດອ່ອນ ແລະຖືກຄົນອື່ນເຫັນວ່າຕ່ຳສຳລັບພວກເຂົາ?

ຈຸດປະສົງຂອງບົດຮຽນ: ເພື່ອຊີ້ໃຫ້ຮູ້ເຖິງການພົວພັນຊີວິດຂອງນາງຣາຫັບໃນພຣະຄັມພີ ແລະຊີວິດທຸກວັນນີ້.

### ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ຖາມທຸກຄົນໃນຫ້ອງຮຽນວ່າ "ຄຳວ່າຈຸດອ່ອນ ໝາຍຄວາມວ່າຢ່າງໃດ?" ໃຫ້ນັກຮຽນແຕ່ລະຄົນຕອບຕາມຄວາມເຂົ້າໃຈຂອງໃຜລາວ. ໃນຊີວິດຂອງມະນຸດທົ່ວໄປແມ່ນຫຍັງຄືຈຸດອ່ອນທີ່ພວກເຮົາພະຍາຍາມຕໍ່ສູ້ຢູ່ເລື້ອຍໆ? (ຂີ້ຄ້ານ, ລຳອຽງ, ຂາດຄວາມຍັບຍັ້ງໃຈ, ຂາດຄວາມຮັບຜິດຊອບ....)

2. ອ່ານໂຢຊວຍ 2:1-14 ຫລັງຈາກນັ້ນຄຣູຈະກ່າວເຖິງຈຸດສຳຄັນຂອງບົດຮຽນໃນວັນນີ້. "ພຣະເຈົ້າຊົງໃຊ້ຄົນທີ່ມີຈຸດອ່ອນແລະຜູ້ທີ່ຄົນອື່ນເຫັນວ່າຕ່ຳ" ໃຊ້ບົດຄຳນຳໃນເຈັ້ຽບົດຮຽນຊຶ່ງເລົ່າເຖິງອາຊີບຂອງນາງຣາຫັບ. ໃນວັນນີ້ພວກເຮົາຈະໄດ້ເວົ້າເຣື່ອງຂອງນາງແລະຈະພິຈາຣະນາເຖິງຊີວິດຂອງນາງດ້ວຍ (ພຣະເຈົ້າຊົງພຣະຄຸນໃນການກະທຳ)

### ນຳພາການສຶກສາພຣະຄັມພີ

3. ອ່ານພຣະຄັມພີ ໂຢຊວຍ 2:1-3 ຄຣູຈະອະທິບາຍເຖິງການທີ່ພຣະເຈົ້າຊົງໃຊ້ຄົນຂອງພຣະອົງເຂົ້າໄປໃນເຮືອນຂອງຍິງໂສເພນີ.

4. ອ່ານ ໂຢຊວຍ 2:4-7 ຄຳຖາມ: ນາງໄດ້ຕອບຜູ້ປົກຄອງທ້ອງຖິ່ນວ່າຢ່າງໃດ? ໃຫ້ນັກຮຽນຕອບແລະກໍຖາມຕໍ່ໄປອີກວ່າ : ລາວໄດ້ຊຸກຊ້ອນພວກນັກສືບໄວ້ທີ່ໃດ? ເປັນຫຍັງລາວຈຶ່ງຫລອກລວງ?

5. ອ່ານ ໂຢຊວຍ 2:8-14 ຫລັງຈາກອ່ານແລ້ວກໍໃຫ້ຖາມນັກຮຽນວ່າ : ນາງຣາຫັບເຊື່ອພຣະເຈົ້າບໍ່? ລາວໄດ້ຍິນຂ່າວຊ່າລືເຣື່ອງຂອງພຣະເຈົ້າບໍ່? ໃຫ້ນັກຮຽນສອງສາມຄົນຕອບ.

ໃນຂໍ້ຕົກລົງຂອງລາວກັບພວກນັກສືບມີຫຍັງແດ່?

6. ອ່ານໂຢຊວຍ 6:22-25 ຜູ້ໃດຜູ້ນຶ່ງອ່ານພຣະຄັມພີ ແລ້ວຄຣູສອນຈະຖາມວ່າ: ເມື່ອເຊື່ອຟັງແລະຊ່ວຍວຽກງານຂອງພຣະເຈົ້າແລ້ວນາງຣາຫັບໄດ້ຮັບການຕອບແທນຫຍັງແດ່?
ຖາມ: ໄດ້ຕາມຄໍາຂໍຮ້ອງຂອງລາວຫລືບໍ່? ຖ້າພວກເຮົາຫາກເຊື່ອຟັງແລະເຮັດວຽກໃຫ້ກັບພຣະເຈົ້າແລ້ວ ພຣະອົງຈະບໍ່ຕອບສນອງຕາມຄວາມຕ້ອງການຂອງເຮົາບໍ່?

7. ນໍາພານັກຮຽນຕອບຄໍາຖາມທີ່ຢູ່ໃນເຈັ້ຽບົດຮຽນ

<u>ຂໍ້ຄິດສໍາລັບວັນນີ້:</u>

8. ເບິ່ງໃນແຜນການຍຶດຄອງເມືອງເຢຣິໂກ, ຖ້າປາສຈາກການນໍາພາຂອງພຣະເຈົ້າແລ້ວ ແມ່ນຕ້ອງພົບກັບຄວາມຫຍຸ້ງຍາກ. ແມ່ນຫຍັງແມ່ນສິ່ງທີ່ຍາກ ທີ່ສະກັດກັ້ນການເຊື່ອຟັງພຣະເຈົ້າສໍາລັບພວກເຮົາ?

9. ນາງຣາຫັບເປັນຍິງໂສເພນີ ຄົນທັງຫລາຍເບິ່ງລາວຕໍ່າ ແຕ່ວ່າໃນບາງແງ່ມຸມພຣະເຈົ້າກໍຍັງຊົງໃຊ້ລາວໄດ້

10. ອ່ານຢາໂກໂບ 2:25 ແລະ ເຮັບເຣີ 11:31
ໃຫ້ນັກຮຽນເບິ່ງໃນກະດານອີກເທື່ອນຶ່ງ ແລ້ວຄິດໃນໃຈວ່າຕົນເອງເຄີຍມີຈຸດອ່ອນອັນໃດແດ່ບໍ່ໃນຊີວິດ. ທ້າທາຍນັກຮຽນບໍ່ໃຫ້ຕິດຕາມຝູງຜີມານຊາຕານອີກຕໍ່ໄປ. ບໍ່ມີສິ່ງໃດທີ່ຈະສະກັດກັ້ນໃນການເຮັດວຽກໃຫ້ພຣະເຈົ້າໄດ້ດອກ.
ປິດທ້າຍດ້ວຍຂໍ້ພຣະຄັມພີ ມັດທາຍບົດທີ 7:1-2 ແລ້ວກໍອະທິຖານ.

ສຈ. ບຸນໂຮມ ພົມມະຈັນ

# ບົດແນະນຳສຳລັບຄຣູສອນ
# ບົດຮຽນທີ 3
# ເວລາມາເຖິງຝັ່ງແມ່ນ້ຳ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ໂຢຊວຍ 3:7-17; 4:15-24
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ໂຢຊວຍ ບົດທີ 3 ແລະ 4
ຈຸດສຳຄັນຂອງບົດຮຽນນີ້: ການວາງໃຈໃນພຣະເຈົ້າ ຈະເຮັດໃຫ້ບັນລຸເປົ້າໝາຍໄດ້ ແມ່ນວ່າບັນຫາຈະໃຫຍ່ຫລວງປານໃດກໍຕາມ.
ຄຳຖາມເພື່ອສຳຣວດ: ເວລາທ່ານໄດ້ມາເຖິງບັນຫາອັນໃຫຍ່ຫລວງ ເຫັນວ່າການແກ້ໄຂນັ້ນຄົງຈະເປັນໄປບໍ່ໄດ້ ແລະການແກ້ໄຂກໍເຫັນວ່າເປົ່າປໂຍດ ທ່ານຈະເຮັດຢ່າງໃດ?
ຈຸດປະສົງຂອງບົດຮຽນ: ເພື່ອພິຈາລະນາໃນການທີ່ຂ້າພະເຈົ້າໄດ້ສຶກສາກ່ຽວກັບພຣະເຈົ້າ ໃນເວລາບັນຫາອັນໃຫຍ່ຫລວງກຳລັງຄືບຄານມາ.

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ໃຫ້ໂອກາດນັກຮຽນໄດ້ແບ່ງປັນປະສົບການ ກ່ຽວກັບກຳແພງກັ້ນ ຫລືບັນຫາໃຫຍ່ກັ້ນຂວາງໜ້າ ແລະເວລານີ້ທ່ານກໍໄດ້ຜ່ານພົ້ນມາແລ້ວ. (ຂ້າມນ້ຳ, ຂ້າມທະເລ, ສ່ຽງຕໍ່ພັຍສົງຄາມ, ລະເບີດແຕກ, ອຸປັດຕິເຫດ.........)

2. ອ່ານຈຸດສຳຄັນຂອງບົດຮຽນນີ້ : " ການວາງໃຈໃນພຣະເຈົ້າຈະເຮັດໃຫ້ບັນລຸເປົ້າໝາຍໄດ້ ແມ່ນວ່າບັນຫາຈະໃຫຍ່ຫລວງປານໃດກໍຕາມ " ນຳພາອະທິຖານ.

### ສຶກສາພຣະຄັມພີ

3. ແບ່ງປັນໃຫ້ນັກຮຽນຟັງວ່າ ເວລາທ່ານຈະປະກອບສິ່ງໃດສິ່ງນຶ່ງ ສິ່ງນັ້ນຫາກບໍ່ມີຄຳແນະນຳທ່ານຈະເຮັດຢ່າງໃດ? ພົບກັບຄວາມຫຍຸ້ງຍາກ, ພົບກັບຄວາມຜິດພາດ ໃນເວລາປະກອບແມ່ນບໍ່? ຖ້າທ່ານມີຫນັງສືໃຫ້ຄຳແນະນຳ ມີຮູບພາບເປັນຕົວຢ່າງເດ, ການປະກອບກໍຄົງງ່າຍຂຶ້ນຫລາຍແມ່ນບໍ່? ເປັນຫຍັງຈຶ່ງເປັນແນວນັ້ນ ໃຫ້ນັກຮຽນອະທິບາຍຈັກສອງສາມຄົນ.

4. ຂຽນໂຄງຮ່າງການສິດສອນໃສ່ກະດານ:
   ກ. ຮັບເອົາຄຳແນະນຳຂອງພຣະເຈົ້າ (3:7-13)
   ຂ. ຕອບສນອງຕໍ່ຄຳແນະນຳຂອງພຣະເຈົ້າ (4:14-17; 4:14-18)
   ຄ. ລະນຶກເຖິງຄຳແນະນຳຂອງພຣະເຈົ້າ (4:19-24)

5. ເຊີນນັກຮຽນອ່ານ ໂຢຊວຍ 3:7-13 ໃຊ້ໃນເຈັ້ຽບົດຮຽນເພື່ອຈະອະທິບາຍ ໃນນັ້ນໃຫ້ເນັ້ນບອກເຖິງ ຄໍາແນະນໍາຂອງພຣະເຈົ້າໄດ້ມອບໃຫ້ແກ່ຄົນອິສຣາເອນທັງຫລາຍແລະໃຫ້ແກ່ໂຢຊວຍ.

6. ຖາມນັກຮຽນ ປະເທດສະຫະຣັດອະເມຣິກາຢາກຄ້າຍຄືການາອານບໍ່? ຕາມແນວຄິດຂອງທ່ານ. ຄຣິສຕະຈັກທຸກວັນນີ້ຕ້ອງປະເຊີນກັບຫຍັງແດ່?

7. ຫົວຂໍ້ທີ 2 ອ່ານໂຢຊວຍ 3:14-17;4:14-18 ໃຫ້ຄຣູອະທິບາຍໂດຍອີງໃສ່ເຈັ້ຽສຶກສາພຣະຄັມພີ. ໃຫ້ເນັ້ນເຖິງຄວາມເຊື່ອແລະການວາງໃຈຂອງພວກອິສຣາເອນ.
ຫີບຄໍາສັນຍາຫມາຍເຖິງຫຍັງໃຫ້ຄຣູອະທິບາຍແກ່ນັກຮຽນ. (ຕົວແທນຂອງພຣະເຈົ້າ, ການຊົງສະຖິດຢູ່ນໍາຂອງພຣະເຈົ້າ.) ເຖິງມີບັນຫາໃຫຍ່ປານໃດກໍຕາມຊາວອິສຣາເອນກໍຜ່ານຜ່າໄດ້, ເຊັ່ນດຽວກັນ ຖ້າເຮົາມີພຣະຄໍາຂອງພຣະເຈົ້າແມ່ນວ່າມີບັນຫາພຣະອົງກໍຊົງຢູ່ນໍາ.

8. ຫົວຂໍ້ທີ 3 ອ່ານໂຢຊວຍ 4:19-24
ໃນຄອບຄົວຂອງທ່ານ ແມ່ນຫຍັງທີ່ທ່ານຖືວ່າເປັນປະເພນີສເລີມສລອງ? (ຄຣິສມາດ, ວັນຂອບພຣະຄຸນພຣະເຈົ້າ, ວັນອິສເຕີ້, ຫລືວັນອື່ນໆ............)
ແມ່ນສິ່ງໃດທີ່ທ່ານຢາກຈະສືບທອດໃຫ້ລູກຫລານຂອງທ່ານໃນຍຸກຕໍ່ໄປກ່ຽວກັບຈິດວິນຍານ? ທ່ານຈະເຮັດຢ່າງໃດພວກເຂົາຈື່ງຈະສືບທອດຈາກທ່ານ?

<u>ຄໍາຫນູນໃຈສໍາລັບວັນນີ້:</u>

9. ໃຫ້ນັກຮຽນພາກັນກົ້ມຫົວຄິດເຖິງບັນຫາທີ່ຕົນມີຢູ່ ແລະກໍາລັງຈະມີໃນວັນຂ້າງຫນ້າ. ເຮົາຈະເອົາຊະນະໄດ້ກໍຕໍ່ເມື່ອເຮົາມີຄວາມເຊື່ອ ແລະການເຊື່ອຟັງເທົ່ານັ້ນ.

10. ອ່ານ ຟີລິປປອຍ 4:13 ປິດດ້ວຍການອະທິຖານ

ສຈ. ບຸນໂຮມ ພົມມະຈັນ

## ບົດແນະນຳສຳລັບຄຣູສອນ
## ບົດຮຽນທີ 4
## ເປັນການສ່ຽງທີ່ກະທຳໄປໂດຍປາສຈາກພຣະເຈົ້າ

---

ຂໍ້ພຣະຄັມພີສຳລັບບົດຮຽນ: ໂຢຊວຍ 7:1-12, 16-21

ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ໂຢຊວຍ 7-8

ຈຸດສຳຄັນຂອງບົດຮຽນນີ້: ກະທຳໄປໂດຍປາສຈາກພຣະເຈົ້າ ເພາະວ່າກະທຳໄປເນັ້ນໃສ່ຕາມຄວາມປາຖນາຂອງຕົນແລະເພິ່ງໃນຄວາມສາມາດຂອງຕົນເອງ ຜົນທີ່ຕາມມາ ຄືຄວາມພ່າຍແພ້ແລະຄວາມຫາຍະນະ.

ຄຳຖາມເພື່ອການສຳຣວດ: ພວກເຮົາຢູ່ໃນຍຸກປັດຈຸບັນມັກເນັ້ນໃສ່ໃນການເພິ່ງຕົນເອງຈຶ່ງໄປຂັດກັບການເພິ່ງພຣະເຈົ້າຢ່າງໃດ?

ຈຸດປະສົງຂອງບົດຮຽນນີ້: ອະທິບາຍໃຫ້ເຫັນວ່າ ຈະມີຫຍັງເກີດຂຶ້ນເມື່ອພວກເຮົາຫາກກະທຳໄປຕາມຄວາມປາຖນາຂອງຕົນເອງແລະເພິ່ງພາຕົນເອງໂດຍປາສຈາກພຣະເຈົ້າ.

### ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ໃຫ້ຂຽນຄຳຖາມດັ່ງກ່າວນີ້ຢູ່ເທິງກະດານ. ບາງຄັ້ງພວກເຮົາເມີນເສີຍບໍ່ຮູ້ຈັກຕອບບຸນແທນຄຸນພຣະເຈົ້າໄດ້ຢ່າງໃດ? ໃຫ້ຕຽມຄຳພຍານອັນສັ້ນໆໄວ້ກ່ຽວກັບເຣື່ອງ ເມື່ອຄັ້ງນຶ່ງ ທ່ານກະທຳໄປດ້ວຍຄວາມໝັ້ນໃຈໃນຕົນເອງໂພດແລະເພິ່ງໃນຄວາມສາມາດຂອງຕົນເອງ ຜົນທີ່ຕາມມາຄືຄວາມພ່າຍແພ້ແລະຜິດຫວັງ.

2. ຫລັງຈາກສະມາຊິກຫ້ອງຮຽນເຂົ້າມາແລ້ວ ໃຫ້ພວກເຂົາຕອບຄຳຖາມທີ່ຂຽນໄວ້ຢູ່ເທິງກະດານນັ້ນ. ໃຫ້ບັນທຶກຄຳເວົ້າຂອງພວກເຂົາໃສ່ກະດານ. ຕໍ່ມາໃຫ້ກ່າວຄຳພຍານຂອງທ່ານໃນເຣື່ອງມີຄວາມໝັ້ນໃຈໃນຕົນເອງໂພດ. ຫລັງຈາກນັ້ນ ໃຫ້ອ່ານຂໍ້ຄວາມຈາກຈຸດສຳຄັນຂອງບົດຮຽນນີ້: "ກະທຳໄປໂດຍປາສຈາກພຣະເຈົ້າ ເພາະວ່າກະທຳໄປເນັ້ນໃສ່ຕາມຄວາມປາຖນາຂອງຕົນແລະເພິ່ງໃນຄວາມສາມາດຂອງຕົນເອງ ຜົນທີ່ຕາມມາຄືຄວາມພ່າຍແພ້ແລະຄວາມຫາຍະນະ." ໃຫ້ນຳອະທິຖານເປີດຫ້ອງຮຽນ.

### ສຶກສາບົດຮຽນ

3. ໃຫ້ລຶບໝົດທຸກສິ່ງທີ່ຢູ່ເທິງກະດານ. ໃຫ້ຂຽນຂໍ້ຄວາມຈາກຫົວຂໍ້ຂອງແຕ່ລະວັກຂອງບົດຮຽນທີ່ມີຫົວຂໍ້ດັ່ງຕໍ່ໄປນີ້. ຂໍ້ຄວາມຈາກຫົວຂໍ້ຂອງ ບົດຮຽນຂອງສະມາຊິກຫ້ອງຮຽນ: "ເງື່ອນໄຂ" "ການສອບສວນ" "ຄຳອະທິບາຍ" ແລະ "ຄຳສາຣະພາບ." ຂໍ້ຄວາມສີ່ຂໍ້ນີ້ຈະແບ່ງອອກເປັນເໝືອນຄືເສົາ ເພື່ອໃຊ້ໃນການອະທິບາຍບົດຮຽນຕໍ່ໄປ.

4. ໃຫ້ອ່ານພຣະທັມໂຢຊວຍ 7:1-5. ໃຫ້ໃຊ້ເນື້ອຫາຈາກ ບົດຮຽນຂອງສະມາຊິກຫ້ອງຮຽນ ມາກ່າວສເນີໃຫ້ສະມາ

ຊິກຫ້ອງຮຽນສັ້ນໆ. ເຊື້ອເຊີນໃຫ້ສະມາຊິກຫ້ອງແບ່ງປັນຄວາມຄິດເຫັນກ່ຽວກັບໃນຖານະພວກເຮົາເປັນຜູ້ທີ່ເຊື່ອບາງຄັ້ງໃນເງື່ອນໄຂໃດທີ່ພວກເຮົາບໍ່ສັດຊື່ຕໍ່ພຣະເຈົ້າ. ໃນຂນະທີ່ພວກເຂົາເວົ້າມາໃຫ້ຂຽນຂໍ້ຄວາມທີ່ບັນລະຍາຍເຖິງຄໍາເວົ້ານັ້ນຢູ່ໃຕ້ຫົວຂໍ້ຂອງຄໍາວ່າ "ເງື່ອນໄຂ." (ຕົວຢ່າງ ຂາດຄວາມເຊື່ອ, ຂີ້ຕົວ, ເຫັນພ້ອມດ້ວຍເຫດຜົນໃນທາງທີ່ຂັດກັບຄວາມເປັນທັມ, ບໍ່ເຊື່ອຟັງ, ເຫັນແກ່ຕົວ, ແລະອື່ນໆ.)

5. ໃຫ້ອ່ານພຣະທັມໂຢຊວຍ 7:6-9. ໃຫ້ໃຊ້ເນື້ອຫາຈາກ <u>ບົດຮຽນຂອງສະມາຊິກຫ້ອງຮຽນ</u> ມາກ່າວສເນີໃຫ້ສະມາຊິກຫ້ອງຮຽນສັ້ນໆ. ເຊື້ອເຊີນໃຫ້ສະມາຊິກຫ້ອງແບ່ງປັນຄວາມຄິດເຫັນກ່ຽວກັບເຣື່ອງລາວ ໃນເມື່ອເວລາພວກເຮົາປະເຊີນກັບອຸປສັກຕ່າງໆໃນຊີວິດຂອງພວກເຮົາ ແລະພວກເຮົາໄດ້ຖາມພຣະເຈົ້າດ້ວຍຄວາມຈິງໃຈວ່າ "ດ້ວຍເຫດໃດ?" ໃນຂນະທີ່ພວກເຂົາເວົ້າມາໃຫ້ຂຽນຂໍ້ຄວາມທີ່ໄດ້ບັນລະຍາຍເຖິງຄວາມເວົ້ານັ້ນຢູ່ໃຕ້ຫົວຂໍ້ຂອງຄໍາວ່າ "ການສອບສວນ." ເຊັ່ນຕົວຢ່າງໃຫ້ອ່ານເພງສັຣເສີນ ບົດທີ 77. ພວກເຮົາຈະມີຈິດໃຈອັນບໍຣິສຸດໄດ້ຢ່າງໃດ ໃນເມື່ອພວກເຮົາມີຄວາມສັບສົນ.

6. ໃຫ້ອ່ານພຣະທັມໂຢຊວຍ 7:10-12. ໃຫ້ໃຊ້ເນື້ອຫາຈາກ<u>ບົດຮຽນຂອງສະມາຊິກຫ້ອງຮຽນ</u> ມາກ່າວສເນີໃຫ້ສະມາຊິກຫ້ອງຮຍນສັ້ນໆ. ໃນຂນະທີ່ກ່າວຢູ່ນັ້ນໃຫ້ຂຽນເຫດຜົນຕ່າງໆທີ່ພຣະເຈົ້າໃຫ້ໂຢຊວຍເສັຽຊັຍ ຢູ່ໃຕ້ຫົວຂໍ້ຂອງຄໍາວ່າ "ຄໍາອະທິບາຍ". (ຄວາມບາບ, ການລະເມີດຕໍ່ພຣະບັນຍັດ, ເອົາສິ່ງອຸທິດໃຫ້ພຣະເຈົ້າມາເປັນຂອງຕົນເອງ, ຂີ້ລັກ, ຂີ້ຕົວະ)

7. ໃຫ້ອ່ານພຣະທັມໂຢຊວຍ 7:16-21. ໃຫ້ໃຊ້ເນື້ອຫາຈາກ<u>ບົດຮຽນຂອງສະມາຊິກຫ້ອງຮຽນ</u> ມາກ່າວສເນີໃຫ້ສະມາຊິກຫ້ອງຮຽນສັ້ນໆ. ໃຫ້ເນັ້ນເຖິງບາດກ້າວຂອງການກະທໍາບາບທີ່ອາການໄດ້ກະທໍາໄປຈົນບໍ່ເຊື່ອຟັງພຣະເຈົ້າ (7:21). ໃຫ້ຂຽນຄໍາວ່າ "ໄດ້ເຫັນ" "ຢາກໄດ້" ແລະ "ໄດ້ເຊື່ອງເອົາໄວ້" ຢູ່ໃຕ້ຫົວຂໍ້ຂອງຄໍາວ່າ "ຄໍາສາຣະພາບ." ໃຫ້ກ່າວເຖິງເຣື່ອງຄວາມຫວັງໃນການຄືນດີກັບພຣະເຈົ້າຍັງມີຢູ່ໃນຄໍາວ່າ "ຈົນກວ່າ" ໃນພຣະທັມໂຢຊວຍ 7:12.

<u>ຫມູນໃຊ້ໃນການກະທໍາ</u>

8. ໃຫ້ຖາມຄໍາຖາມຂໍ້ທີ 4 ຈາກ <u>ບົດຮຽນຂອງສະມາຊິກຫ້ອງຮຽນ.</u> ໃຫ້ເວລາພວກເຂົາຕອບ. ຕໍ່ມາໃຫ້ພວກເຂົາຫລຽວມາທາງກະດານນີ້. ບອກພວກເຂົາວ່າ ເມື່ອພວກເຮົາມາເປັນຜູ້ທີ່ເຊື່ອໃນພຣະເຢຊູຄຣິດ ພວກເຮົາໄດ້ເຂົ້າມາຮັບພຣະສັນຍາຂອງພຣະຄຸນກັບພຣະເຈົ້າ. ໃຫ້ສະມາຊິກແຕ່ລະຄົນເບິ່ງຂໍ້ຄວາມຈາກຫົວຂໍ້ທັງສີ່ທີ່ໄດ້ຂຽນໄວ້ຢູ່ເທິງກະດານນັ້ນ ແລະໃຫ້ພວກເຂົາຫວນຄິດຄືນເບິ່ງຊີວິດຂອງພວກເຂົາ. ເຕືອນພວກເຂົາວ່າ ເຖິງແມ່ນວ່າພວກເຮົາໄດ້ຮັບຄວາມລອດພົ້ນແລ້ວກໍຈິງ ບໍ່ໄດ້ຫມາຍຄວາມວ່າພວກເຮົາຈະບໍ່ເຮັດບາບອີກຈັກເທື່ອ. ເຖິງຢ່າງໃດກໍຕາມ ເມື່ອພວກເຮົາເຮັດບາບ ພວກເຮົາໄດ້ເຮັດໃຫ້ຄວາມສາມັກຄີທັມກັບພຣະເຈົ້າໄດ້ຮັບຄວາມເຈັບປວດ ຈົນກວ່າພວກເຮົາຮັບສາຣະພາບແລະທູນຂໍການໃຫ້ອະພັຍຈາກພຣະອົງ. ໃຫ້ອ່ານ 1 ໂຢຮັນ 1:9. ໃຫ້ກ່າວດັ່ງນີ້, <u>ສັຣເສີນພຣະເຈົ້າສໍາລັບຄວາມສັດຊື່ຂອງພຣະອົງ ແລະຄວາມຈິງແລ້ວຄວາມບາບຂອງພວກເຮົາໄດ້ຮັບການໃຫ້ອະພັຍ.</u> ທ້າທາຍໃຫ້ສະມາຊິກຫ້ອງຢ່າໄດ້ "ບິນດ່ຽວເລີຍ" ເພາະວ່າປາສຈາກພຣະເຈົ້າແລ້ວ ພວກເຮົາພາດພັ້ງຢ່າງແນ່ນອນ. ໃຫ້ຫາຜູ້ນຶ່ງອະທິຖານປິດ.

ສຈ. ບຸນເຮັ່ງ ພົງປຣະພັນ

# ບົດແນະນຳສຳລັບຄຣູສອນ
# ບົດຮຽນທີ 5
# ພຣະເຈົ້າຊົງປະທານຊັຍຊະນະ

---

ຂໍ້ພຣະຄັມພີສຳລັບບົດຮຽນ: ໂຢຊວຍ 9:3-15; 10:6-14, 40-42

ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ໂຢຊວຍ 9-12

ຈຸດສຳຄັນຂອງບົດຮຽນນີ້: ພຣະເຈົ້າຊົງປະທານຊັຍຊະນະໃຫ້ໄພ່ພົນຂອງພຣະອົງ ເມື່ອພວກເຂົາຫາກໄວ້ວາງໃຈ ແລະຕິດຕາມພຣະອົງ.

ຄຳຖາມເພື່ອການສຳຣວດ: ພວກເຮົາສາມາດເພິ່ງພຣະເຈົ້າໄດ້ບໍ່?

ຈຸດປະສົງຂອງບົດຮຽນນີ້: ເພື່ອຈະໄດ້ຄົ້ນຄວ້າພຣະທັມຕອນນີ້ແລ້ວນຳມາປະກອບໃນຊີວິດ ຊຶ່ງມີເຣື່ອງລາວຢູ່ວ່າພຣະເຈົ້າຊົງປະທານຊັຍຊະນະໃຫ້ໃນຊີວິດຂອງພວກເຮົາ.

## ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ກ່ອນຈະເຖິງໂມງ ໃຫ້ຂຽນຄຳຖາມນີ້ຢູ່ເທິງກະດານ ການຮັກສາຄຳເວົ້າໃນຄຳໝັ້ນສັນຍາສຳຄັນຢ່າງໃດສຳລັບທ່ານ? ທ່ານຄິດວ່າສຳຄັນແທ້ບໍ ໃນວັທນະທັມແລະສັງຄົມຂອງພວກເຮົາ? ແລະອີກອັນນຶ່ງ ໃຫ້ຊອກຫາໜັງສືພິມ ຫລື ວາຣະສານຂ່າວຄາວທີ່ພາດຫົວເຣື່ອງບັນຫາທີ່ເກີດຂຶ້ນຍ້ອນປະເທດ ຫລື ສ່ວນບຸກຄົນບໍ່ຍອມຮັກສາຄຳເວົ້າຂອງພວກເຂົາ. ໃຫ້ນຳມາຫ້ອງຮຽນ.
2. ຫລັງຈາກພວກສະມາຊິກຫ້ອງຮຽນເຂົ້າມາແລ້ວ ໃຫ້ຖາມພວກເຂົາໃນຂໍ້ຄຳຖາມທີ່ຂຽນໄວ້ແລ້ວຢູ່ເທິງກະດານ. ໃຫ້ຢາຍໜັງສືພິມ ຫລື ວາຣະສານທີ່ນຳມານັ້ນໃຫ້ບາງຄົນ ເພື່ອຈະໃຫ້ນຳມາອ່ານໃຫ້ພວກສະມາຊິກຫ້ອງຟັງໃນເວລາທີ່ທ່ານເຫັນວ່າເໝາະສົມ.

### ສຶກສາບົດຮຽນ

3. ໃຫ້ພວກເຂົາອ່ານວາຣະສານຫລືໜັງສືພິມທີ່ທ່ານຢາຍໃຫ້ພວກເຂົາ. ຫລັງຈາກນັ້ນໃຫ້ກ່າວຕໍ່ສະມາຊິກຫ້ອງຮຽນວ່າ ບົດຮຽນຂອງມື້ນີ້ຈະໄດ້ເວົ້າເຖິງເຣື່ອງຜູ້ນຳຂອງຊາວອິສຣາເອນຈະຕ້ອງຮັກສາຄຳໝັ້ນສັນຍາທີ່ພວກເຂົາໄດ້ຮັບປາກກັບຄົນກຸ່ມນຶ່ງທີ່ມີຄວາມຕັ້ງໃຈຫລອກລວງພວກເຂົາ. ໃຫ້ອະທິບາຍວ່າ ນີ້ເປັນຕົວຢ່າງອັນນຶ່ງຂອງການເຊື່ອຟັງ. ໃຫ້ອ່ານຈຸດສຳຄັນຂອງບົດຮຽນນີ້: "ພຣະເຈົ້າຊົງປະທານຊັຍຊະນະໃຫ້ໄພ່ພົນຂອງພຣະອົງເມື່ອພວກເຂົາຫາກໄວ້ວາງໃຈແລະຕິດຕາມພຣະອົງ."

4. ໃຫ້ຂຽນຫົວຂໍ້ນີ້ຢູ່ເທິງກະດານ "ຊັຍຊະນະເໜືອຜູ້ທີ່ມາຫລອກລວງ (9:3-15)." ໃຫ້ພວກເຂົາອອກຄວາມຄິດເຫັນເຊັ່ນຕົວຢ່າງຄຸນນະພາບສິນຄ້າບາງຊະນິດທີ່ໂຄສະນາໃນໂທຣະທັດ, ການໂຄສະນາສິນຄ້າລົດຣາຄາ, ເຄື່ອງກົນກັຍສມັຍໃໝ່, ແລະອື່ນໆ. ຂອງພວກນີ້ດີແທ້ຫລືວ່າບໍ່ ຫລືວ່າໂຄສະນາຫລອກລວງຕົວະຕົ້ມຜູ້ຊື້. ຫລັງຈາກນັ້ນໃຫ້ບັນລະຍາຍພຣະທັມໂຢຊວຍ 9:3-15 ໂດຍໃຊ້ ບົດຮຽນຂອງສະມາຊິກຫ້ອງຮຽນ.

5. ໃຫ້ນໍາສະມາຊິກສົນທະນາຕອບຄໍາຖາມດັ່ງຕໍ່ໄປນີ້:

- ♦ ແມ່ນຫຍັງເປັນຕົ້ນຕໍທີ່ເຮັດໃຫ້ຊາວກິເບໂອນເຮັດຢ່າງນີ້? ພວກເຂົາຄິດບໍ່ວ່າເປັນການຖືກຕ້ອງ? ເປັນຫຍັງ?
- ♦ ພຣະທັມໂຢຊວຍ 9:14 ໄດ້ເຕືອນພວກເຮົາຫຍັງແດ່?
- ♦ ການຕັດສິນໃຈທົ່ວໆໄປໃນແຕ່ລະວັນທີ່ພວກເຮົາເຮັດໄປ ໂດຍທີ່ບໍ່ໄດ້ຊອກສແວງຫານ້ຳພຣະທັຍພຣະເຈົ້າ ມີອັນໃດແດ່?

6. ໃຫ້ຂຽນຫົວຂໍ້ນີ້ຢູ່ເທິງກະດານ "ຊັຍຊະນະເຫນືອຜູ້ທີ່ຈະມາທໍາລາຍ (10:6-14, 40-42)." ໃຫ້ສລູບພຣະທັມໂຢຊວຍ 9:16-27. ເນັ້ນໃຫ້ພວກເຂົາຮູ້ວ່າ ໂຢຊວຍໄດ້ປະຕິບັດຕາມຄໍາຫມັ້ນສັນຍາຕໍ່ຊາວກິເບໂອນ ແຕ່ພວກເຂົາໄດ້ຮັບຜົນທີ່ຕາມມາເຫມືອນກັນ. ບອກໃຫ້ພວກສະມາຊິກອ່ານເຣື່ອງລາວອັນສັ້ນໆຢູ່ໃນ <u>ບົດຮຽນຂອງສະມາຊິກຫ້ອງຮຽນ</u> ທີ່ມີຫົວເຣື່ອງວ່າ "ຈັດການກັບຄວາມຫລອກລວງ." ໃຫ້ຖາມຄວາມເຫັນຂອງພວກເຂົາໃນເຣື່ອງນີ້. ໃຫ້ບັນລະຍາຍພຣະທັມໂຢຊວຍ 10:6-14, 40-42 ໂດຍໃຊ້ <u>ບົດຮຽນຂອງສະມາຊິກຫ້ອງຮຽນ.</u>

7. ໃຫ້ນໍາສະມາຊິກສົນທະນາຕອບຄໍາຖາມດັ່ງຕໍ່ໄປນີ້:

- ♦ ເປັນຫຍັງພຣະເຈົ້າຮັບຮອງກັບໂຢຊວຍວ່າພຣະອົງຈະມອບຊັຍຊະນະໃຫ້ລາວໃນພຣະທັມໂຢຊວຍ 10:8?
- ♦ ທ່ານຄິດວ່າພຣະເຈົ້າຍັງໃຊ້ສິ່ງທັມມະຊາດທີ່ພຣະອົງສ້າງຂື້ນມາ ເພື່ອໃຫ້ເປັນໄປຕາມພຣະປະສົງຂອງພຣະອົງຢູ່ບໍ່?
- ♦ ການອ້ອນວອນມີພາກສ່ວນອັນໃດໃນເຣື່ອງນີ້?
- ♦ ຕາມພຣະທັມໂຢຊວຍ 10:40-42 ໃຜເປັນຜູ້ເຮັດເສັຽແລະໃຜເປັນຜູ້ໄດ້ຮັບຊັຍຊະນະ?

<u>ຫມູນໃຊ້ໃນການກະທໍາ</u>

8. ໃຫ້ຖາມສະມາຊິກຫ້ອງວ່າ <u>ສໍາລັບທ່ານແລ້ວໄວ້ວາງໃຈກັບພຣະເຈົ້າຍາກກວ່າ ຫລື ຕິດຕາມພຣະເຈົ້າຍາກກວ່າ?</u> ໃຫ້ເຕືອນພວກເຂົາວ່າ ພວກເຮົາຈະຕ້ອງປະຕິບັດທັງສອງຢ່າງພຣະເຈົ້າຈິ່ງນໍາຊັຍຊະນະມາໃຫ້ພວກເຮົາໃນຊີວິດຂອງພວກເຮົາ. ທ້າທາຍໃຫ້ພວກເຂົາມີຄວາມສັດຊື່ຕໍ່ພຣະເຈົ້າ ທູນຂໍຕໍ່ພຣະອົງໃຫ້ເປັນຜູ້ນໍາພາ ເພື່ອຈະໄດ້ຮັບຊັຍຊະນະຕໍ່ສິ່ງທ້າທາຍທີ່ພວກເຮົາປະເຊີນຢູ່. ໃຫ້ພວກເຂົາເວົ້າຕາມທ່ານ "ໄວ້ວາງໃຈແລະຕິດຕາມພຣະອົງ." ອະທິຖານປິດ.

ສຈ. ບຸນເຮັ່ງ ພົງປຣະພັນ

# ບົດແນະນຳສຳລັບຄຣູສອນ
# ບົດຮຽນທີ 6
# ຈົ່ງເລືອກເອົາພຣະເຈົ້າ ວັນນີ້

---

ຂໍ້ພຣະຄັມພີສຳລັບບົດຮຽນ: ໂຢຊວຍ 24:1-3, 13-25

ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ໂຢຊວຍ 24

ຈຸດສຳຄັນຂອງບົດຮຽນນີ້: ພວກເຮົາຖືກຮ້ອງໃຫ້ມອບກາຍຖວາຍຈິດໃຈໃຫ້ກັບພຣະເຈົ້າຢ່າງເດັດຂາດ ແລະຮັບໃຊ້ພຣະອົງເຕັມກຳລັງໃຫ້ສົມກັບວ່າພຣະອົງຊົງເປັນອົງ ພຣະຜູ້ເປັນເຈົ້າຂອງພວກເຮົາ.

ຄຳຖາມເພື່ອການສຳຫລວດ: ການມອບກາຍຖວາຍຈິດໃຈໃຫ້ກັບພຣະເຈົ້າຢ່າງເດັດຂາດ ແລະຮັບໃຊ້ພຣະອົງເຕັມກຳລັງໃຫ້ສົມກັບວ່າພຣະອົງຊົງເປັນອົງພຣະຜູ້ເປັນເຈົ້າຂອງທ່ານ ເຮັດໃຫ້ຊີວິດຂອງທ່ານມີການປ່ຽນແປງອັນໃດແດ່?

ຈຸດປະສົງຂອງບົດຮຽນນີ້: ບົດຮຽນນີ້ຈະຊ່ອຍທ່ານມອບກາຍຖວາຍຈິດໃຈໃຫ້ກັບພຣະເຈົ້າຢ່າງເດັດຂາດ ແລະຮັບໃຊ້ພຣະອົງເຕັມກຳລັງໃຫ້ສົມກັບວ່າພຣະອົງຊົງເປັນອົງພຣະຜູ້ເປັນເຈົ້າຂອງທ່ານ.

## ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ໃຫ້ຂຽນຂໍ້ຄວາມຈຸດສຳຄັນຂອງບົດຮຽນນີ້ຢູ່ເທິງກະດານ "ພວກເຮົາຖືກຮ້ອງໃຫ້ມອບກາຍຖວາຍຈິດໃຈໃຫ້ກັບພຣະເຈົ້າຢ່າງເດັດຂາດ ແລະຮັບໃຊ້ພຣະອົງເຕັມກຳລັງໃຫ້ສົມກັບວ່າພຣະອົງຊົງເປັນອົງພຣະຜູ້ເປັນເຈົ້າຂອງພວກເຮົາ."

2. ກ່ອນຈະຮອດມື້ວັນອາທິດ ໃຫ້ຫາຄົນນຶ່ງມາກ່າວຄຳພຍານຂອງລາວກ່ຽວກັບເຣື່ອງມາຮັບເຊື່ອໃນອົງພຣະເຢຊູຄຣິດ. ເມື່ອຮອດມື້ນັ້ນເຊີນໃຫ້ຄົນຜູ້ນັ້ນມາກ່າວຄຳພຍານ. ຫລັງຈາກລາວກ່າວຄຳພຍານແລ້ວ ໃຫ້ອ່ານຂໍ້ຄວາມຈາກຈຸດສຳຄັນຂອງບົດຮຽນນີ້ ແລ້ວອະທິຖານເປີດ.

### ສຶກສາບົດຮຽນ

3. ໃຫ້ນຳຄຳຖາມຂໍ້ທີ 2 ຈາກ ບົດຮຽນຂອງສະມາຊິກຫ້ອງຮຽນ ມາຖາມພວກເຂົາ " ແມ່ນຫຍັງທີ່ເປັນຈຸດສຳຄັນສາມຫາສີ່ຈຸດໃນບົດຮຽນ "ສລູບເຣື່ອງປະຫວັດສາດທີ່ຜ່ານມາ" ພຣະເຈົ້າໄດ້ເຮັດຫຍັງແດ່ໃນຊີວິດຂອງທ່ານ? ຫລັງຈາກໃຫ້ພວກເຂົາໃຊ້ເວລາອັນສັ້ນໆຕອບຄຳຖາມນັ້ນແລ້ວ ໃຫ້ບັນລະຍາຍພຣະທັມໂຢຊວຍ 24:1-3, 13 ໂດຍໃຊ້ ບົດຮຽນຂອງສະມາຊິກຫ້ອງຮຽນ. ໃຫ້ເນັ້ນເຖິງຄວາມສຳຄັນໃນການຈົດຈຳສິ່ງທີ່ພຣະເຈົ້າໄດ້ກະທຳເພື່ອພວກເຮົາໃນອະດີດ. ຮ້ອງຂໍໃຫ້ຜູ້ນຶ່ງ ອະທິຖານຂອບຄຸນພຣະເຈົ້າແລະສັຣເສີນພຣະອົງໃນຄວາມສັດຊື່ຂອງພຣະອົງ.

4. ໃຫ້ນຳຄຳຖາມຂໍ້ທີ 1 ຈາກບົດຮຽນຂອງສະມາຊິກຫ້ອງຮຽນ ມາຖາມພວກເຂົາ "ໃຫ້ຄິດທວນຄືນເບິ່ງການຕັດສິນໃຈສອງຫລືສາມຢ່າງທີ່ສຳຄັນທີ່ສຸດໃນຊີວິດຂອງທ່ານ (ຕົວຢ່າງ: ຕັດສິນໃຈໃນການຊື່ງເອີ້ນຂອງພຣະເຈົ້າ ເລືອກການສຶກສາສູງ ເລືອກຄູ່ຄອງໃນຊີວິດ ເລືອກເຮືອນທີ່ຈະຊື້ ຫລືອື່ນໆ). ແມ່ນຜູ້ໃດຊ່ອຍອະທິບາຍໃຫ້ທ່ານເຫັນແຈ່ມແຈ້ງແລະນຳພາທ່ານໃຫ້ຕັດສິນໃຈໃນທາງທີ່ຖືກຕ້ອງ?
ຫລັງຈາກໃຫ້ພວກເຂົາໃຊ້ເວລາອັນສັ້ນໆຕອບຄຳຖາມນັ້ນແລ້ວ ໃຫ້ບັນລະຍາຍພຣະທັມໂຢຊວຍ 24:14-22 ໂດຍໃຊ້ ບົດຮຽນຂອງສະມາຊິກຫ້ອງຮຽນ. ໃຫ້ເນັ້ນເຖິງຄວາມໝາຍຂອງຄຳວ່າ ""ຂາບໄຫວ້," "ຍົກຍໍໃຫ້ກຽດ," "ຢຳເກງ," ຮັບໃຊ້" ແລະສັດຊື່" ໃນຂໍ້ທີ 14 ໃຫ້ຖາມພວກເຂົາວ່າ ເປັນຫຍັງໂຢຊວຍຈຶ່ງຕອບໃນລັກສະນະຂໍ້ທີ 19-20 ທ່ານຄິດວ່າຢ່າງໃດ?

5. ໃຫ້ສະມາຊິກຫ້ອງເປີດປຶ້ມພຣະທັມຢາໂກໂບ 2:26. ຕໍ່ມາໃຫ້ທ່ານອ່ານຈາກພຣະທັມໂຢຊວຍ 24:23-25. ໜູນໃຈໃຫ້ພວກເຂົາຟັງຄວາມກ່ຽວຂ້ອງໃນພຣະທັມຢາໂກໂບ 2:26 ກັບພຣະທັມໂຢຊວຍ. ໃຫ້ພວກເຂົາອອກຄວາມເຫັນໃນພຣະທັມສອງຕອນນີ້. ຫລັງຈາກນັ້ນໃຫ້ບັນລະຍາຍພຣະທັມໂຢຊວຍ 24:23-25.

6. ໃຫ້ສະມາຊິກຫ້ອງອ່ານເບິ່ງ "ບາດກ້າວຂອງພິທີການທຳສັນຍາ" ໃນບົດຮຽນຂອງສະມາຊິກຫ້ອງ. ໃຫ້ພວກເຂົາຫ້າມາທີໄປອ່ານຊອກຫາຂໍ້ມູນຕ່າງໆແລະສົມທຽບກັບບາດກ້າວ 6 ຢ່າງທີ່ໄດ້ພົບໃນຂໍ້ຕ່າງໆໃນພຣະທັມໂຢຊວຍບົດທີ 24.

ໜູນໃຊ້ໃນການກະທຳ

7. ໃຫ້ນຳຄຳຖາມຂໍ້ທີ 4 ຈາກ ບົດຮຽນຂອງສະມາຊິກຫ້ອງຮຽນ " ທ່ານຄິດວ່າແມ່ນຫຍັງເປັນສິ່ງພິສູດໃຫ້ເຫັນວ່າຄົນສມັຍນີ້ໄດ້ມອບກາຍຖວາຍຈິດໃຈໃຫ້ກັບພຣະເຈົ້າຢ່າງເດັດຂາດ ແລະຮັບໃຊ້ພຣະອົງຈົນສຸດກຳລັງ?
ໃຫ້ຂຽນຄວາມຄິດເຫັນຂອງພວກເຂົາຢູ່ເທິງກະດານແລ້ວນຳມາສົນທະນາກັນ.

8. ໃຫ້ຢາຍເຈັ້ຽແຂງໃບນ້ອຍໆໃຫ້ແຕ່ລະຄົນ. ໃຫ້ພວກເຂົາຂຽນເຣື່ອງບັນຫາທີ່ພວກເຂົາຕ້ອງໄດ້ຕັດສິນໃຈ. ບອກພວກເຂົາກ່ອນລ່ວງໜ້າວ່າເຣື່ອງບັນຫາທີ່ຂຽນໄວ້ນັ້ນບໍ່ຕ້ອງໃຫ້ໃຜຮູ້ນຳ. ເກັບໄວ້ສຳລັບສ່ວນຕົວຂອງພວກເຂົາ. ຕໍ່ມາໃຫ້ປີ້ນເຈັ້ຽແຂງໄປໜ້າອື່ນແລະຂຽນນຶ່ງຫາສາມຢ່າງທີ່ຈະໄດ້ເຮັດກັບເຣື່ອງບັນຫານີ້ ພວກເຂົາຈະຕ້ອງມອບບັນຫານີ້ໃຫ້ພຣະເຈົ້າເປັນຜູ້ຊ່ອຍ. ໃຫ້ອ່ານພຣະທັມໂຢຊວຍ 24:25-27 ອີກເທື່ອນຶ່ງ.
ທ້າທາຍໃຫ້ພວກເຂົາເບິ່ງເຈັ້ຽແຂງໃບນີ້ເປັນເໝືອນກັບ "ກ້ອນຫີນ" ທີ່ໄດ້ກ່າວເຖິງໃນພຣະທັມຂໍ້ນີ້. ໜູນໃຈພວກເຂົາໃຫ້ເກັບເຈັ້ຽແຂງໃບນີ້ເຫນັບໃສ່ໃນພຣະຄັມພີບ່ອນພຣະທັມຢາໂກໂບ 2:26 ເພື່ອໃຫ້ເປັນສິ່ງເຕືອນໃຈທີ່ພວກເຂົາໄດ້ມອບກາຍຖວາຍຈິດໃຈໃຫ້ພຣະເຈົ້າໃນມື້ນີ້ແລ້ວ. ໃຫ້ປິດຫ້ອງຮຽນດ້ວຍການອະທິຖານ.

ສຈ. ບຸຣເຮັ່ງ ພົງປຣະພັນ

## ບົດແນະນຳສຳລັບຄຣູສອນ
## ບົດຮຽນທີ 7
## ລົງໄປເຖິງຊົ່ວລູກຫລານ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພວກຜູ້ປົກຄອງ 2:6-7, 11-19
ຂໍ້ພຣະຄຳທັງຫມົດສຳລັບບົດຮຽນນີ້: ພວກຜູ້ປົກຄອງ 1--2
ຈຸດສຳຄັນຂອງບົດຮຽນນີ້: ຢ່າປະຖິ້ມພຣະເຈົ້າ
ຄຳຖາມເພື່ອການສຳຣວດ: ໃນສມັຍລູກຫລານເຮົາຈະຕ້ອງເຊື່ອພຣະເຈົ້າຄືເຮົາບໍ່?
ຈຸດປະສົງຂອງບົດຮຽນນີ້: ເພື່ອສ້າງທາງແຫ່ງຄວາມເຊື່ອໄປເຖິງຈຸດສຸດຍອດ

ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ
- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

### ບົດນຳ
ຊີວິດການເປັນຢູ່ຂອງອິສຣາເອນຈະມັ່ງຄັ່ງສົມບູນ ຫລືຕົກທຸກໄດ້ຍາກຫລາຍພຽງໃດນັ້ນແມ່ນຂຶ້ນຢູ່ກັບພວກເຂົາຟັງຄວາມພຣະເຈົ້າຫລາຍປານໃດ? ໃນປະຫວັດສາດຂອງພວກອິສຣາເອນຖືກລົ້ມລຸກຄຸກຄານກໍຍ້ອນເຂົາບໍ່ເຊື່ອຟັງຄຳສັ່ງສອນຂອງອົງພຣະຜູ້ເປັນເຈົ້າ ເວລາໃດທີ່ຜູ້ນຳແລະປະຊາຊົນປະຕິບັດຕາມກົດຂອງພຣະເຈົ້າປະເທດຊາດກໍຈະເຣີນຮຸ່ງເຮືອງ.

ຂໍໃຫ້ຜູ້ນຶ່ງອ່ານ 2:6-7 ພວກຜູ້ນຳຮັບໃຊ້ຕໍ່ຈາກໂຢຊວຍ
1. ໂຢຊວຍແບ່ງທີ່ດິນໃຫ້ພວກອິສຣາເອນເປັນຂອງໃຜລາວເພື່ອທຳມາຫາກິນ.
2. ພວກຜູ້ນຳທີ່ຮ່ວມຮັບໃຊ້ກັບໂຢຊວຍຮູ້ຈັກກິຈການທຸກຢ່າງທີ່ໂຢຊວຍເຮັດຈຶ່ງຮັບໃຊ້ພຣະເຈົ້າຕໍ່ໄປຈົນເຂົາຕາຍ.
3. ໂຢຊວຍສັ່ງສອນໃຫ້ຮັບໃຊ້ພຣະເຈົ້າໃນພຣະທັມໂຢຊວຍ 24:15 ດັ່ງນີ້;
   ກ. ຈົ່ງຂາບໄຫວ້ພຣະຜູ້ເປັນເຈົ້າ ແລະຮັບໃຊ້ພຣະອົງດ້ວຍຄວາມຈິງໃຈ
   ຂ. ຄວາມສັດຊື່
   ຄ. ຈົ່ງປະຖິ້ມພຣະຕ່າງໆ
   ງ. ຖ້າວ່າພວກທ່ານບໍ່ເຕັມໃຈຮັບໃຊ້ພຣະເຈົ້າຈົ່ງຕັດສິນໃຈມື້ນີ້ ວ່າພວກທ່ານຈະຮັບໃຊ້ຜູ້ໃດ
   ຈ. ຂ້າພະເຈົ້າແລະຄອບຄົວຂອງຂ້າພະເຈົ້າຈະຮັບໃຊ້ພຣະຜູ້ເປັນເຈົ້າ

ຂໍໃຫ້ຜູ້ນຶ່ງອ່ານ 2:11-19 ລຸ້ນເກີດໃຫມ່ໄຫຍ່ລຸນ
1. ອິສຣາເອນເຮັດຜິດຕໍ່ສູ້ອົງພຣະຜູ້ເປັນເຈົ້າ ຫມາຍຄວາມວ່າບໍ່ຟັງຄວາມ, ໄປຂາບໄຫວ້ພຣະອື່ນ ເຣື່ອງນີ້ແມ່ນຫລັງຈາກພວກຜູ້ນຳທີ່ຮ່ວມກັບໂຢຊວຍຕາຍໄປແລ້ວເຂົາກໍບໍ່ເຮັດຕາມພໍ່ແມ່ອີກ. (ຂໍ້ 11)
2. ຄຳວ່າປູ່ຍ່າຕາຍາຍມີຢູ່ສອງລຸ້ນດ້ວຍກັນ (ຂໍ້ 12-13)

ກ. ໂຢຊວຍເວົ້າກັບອິສຣາເອນພວກທ່ານຈະຮັບໃຊ້ພຣະເຈົ້າຫລືຈະຮັບໃຊ້ພຣະປູ່ຍາຕາຍາຍ ແມ່ນເພິ່ນເວົ້າ ພຣະຂອງລຸ້ນພໍ່ແມ່ກ່ອນຮັບສ່ວນແບ່ງໃນແຜ່ນດິນໃຫມ່. ຖ້າຈະເວົ້າຕາມພາສາດຽວນີ້ຈະເວົ້າວ່າປູ່ທວດ.

ຂ. ຄຳວ່າເຂົາປະລະການນະມັສການພຣະຜູ້ເປັນເຈົ້າແຫ່ງປູ່ຍ່າຕາຍາຍ ແມ່ນປູ່ຍາຕາຍາຍຫລັງຈາກໂຢຊວຍ.

3. ຜົນສະທ້ອນເມື່ອພຣະເຈົ້າຊົງພຣະພິໂຣດ (ແປວ່າໃຈຮ້າຍ) (ຂໍ້ 14-15).

ກ. ຊົງເຮັດໃຫ້ພວກໂຈນມາໂຈມຕີ ແລະປຸ້ນພວກເຂົາ ໝາຍຄວາມວ່າບໍ່ເບິ່ງແຍງບໍ່ປົກປ້ອງຄຸ້ມຄອງ, ບໍ່ຊ່ອຍ, ໂຈນມາເຮັດຫຍັງກໍຢ່າ. (ພາສາຄົນດຽວນີ້ແມ່ນນັ່ງເບິ່ງລ້າໆ).

ຂ. ປ່ອຍໃຫ້ສັຕຣູຊະນະເຂົາ ໝາຍຄວາມວ່າເມື່ອກ່ອນພຣະອົງຊົງຊ່ອຍເຂົາໃນການຮົບເສິກເວລາພຣະອົງ ໃຈຮ້າຍກໍປ່ອຍໃຫ້ເຂົາຕໍ່ສູ້ເອງ. (ພາສາຄົນດຽວນີ້ຈະເວົ້າວ່າ ອວດເກ່ງຫລາຍກໍເຮັດເອງສາ)

ຄ. ພຣະເຈົ້າຊົງຕໍ່ສູ້ເຂົາ, ພຣະຄັມພີແລະຄອມເມັນແຕຣີບໍ່ມີໃຜບອກວ່າພຣະເຈົ້າຕໍ່ສູ້ເຂົາແນວໃດ. ແຕ່ເຮົາຮູ້ ວ່າພວກເຂົາຕົກຢູ່ໃນພາວະຂັດສົນຢ່າງຫລວງຫລາຍ. (ຂໍ້ 15ຂ).

4. ທຸກຄັ້ງທີ່ພຣະເຈົ້າແຕ່ງຕັ້ງຜູ້ປົກຄອງ (ຂໍ້ 16)

ກ. ເພື່ອຊ່ອຍອິສຣາເອນ

ຂ. ເຂົາບໍ່ຍອມປະຕິບັດຕາມຄຳສັ່ງຂອງຜູ້ປົກຄອງ.

ຄ. ອິສຣາເອນຍັງບໍ່ສັດຊື່ອີກ ດັ່ງໂຢຊວຍສອນແລ້ວ ຈົ່ງຮັບໃຊ້ພຣະເຈົ້າດ້ວຍຄວາມສັດຊື່ (ໂຢຊວຍ 24:15).

ງ. ພຣະອົງຊ່ອຍຜູ້ປົກຄອງຜູ້ນັ້ນ (ຂໍ້ 18)

ຈ. ພຣະອົງຊົງຊ່ອຍປະຊາຊົນ (ຂໍ້ 18)

ສ. ຊົງຊ່ອຍເຂົາດ້ວຍວ່າພຣະອົງຊົງເມດຕາ

4. ທຸກເທື່ອທີ່ຜູ້ປົກຄອງຕາຍໄປເຂົາກໍລືມພຣະເຈົ້າອີກ (ຂໍ້ 19)

<u>ຄຳຖາມ:</u>

1. ໂຢຊວຍຮຽນຈາກໂມເຊຢ່າງໃດ?

2. ຜູ້ນຳລຸ້ນຕໍ່ມາຮຽນຈາກໂຢຊວຍຢ່າງໃດ?

3. ເມື່ອພວກລູກຫລານເຮັດຜິດຕໍ່ພຣະເຈົ້າແລ້ວມີຜົນສະທ້ອນຢ່າງໃດ?

4. ເຣື່ອງນີ້ສອນທ່ານຢ່າງໃດແດ່?

5. ຕໍ່ໄປນີ້ທ່ານຈະສັ່ງສອນລູກຫລານຢ່າງໃດເພື່ອເຂົາເຈົ້າຈະບໍ່ປະລະພຣະເຈົ້າ?

ສຈ. ດຣ. ທູນພັນ ວົງສຸຣິດທ໌

## ບົດແນະນຳສຳລັບຄຣູສອນ

## ບົດຮຽນທີ 8

## ນາງເດໂບຣາ: ຜູ້ປະກາດ, ຜູ້ປົກຄອງ, ແລະພັລຍາ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພວກຜູ້ປົກຄອງ 4:1-17, 21; 5:1-3, 12-13

ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ພວກຜູ້ປົກຄອງ 4--5

ຈຸດສຳຄັນຂອງບົດຮຽນນີ້: ພຣະເຈົ້າຊົງໃຊ້ທັງຊາຍແລະຍິງເພື່ອໃຫ້ພຣະປະສົງຂອງພຣະອົງສຳເຣັດ.

ຄຳຖາມເພື່ອການສຳຣວດ: ຜູ້ຍິງຈະຮັບໃຊ້ພຣະເຈົ້າໄດ້ແນວໃດ?

ຈຸດປະສົງຂອງບົດຮຽນນີ້: ເພື່ອພິຈາຣະນາເບິ່ງພາຣະຂອງນາງເດໂບລາໃນການຮັບໃຊ້ພຣະເຈົ້າແລະການປົດປ່ອຍຊາວອິສຣາເອັນ ວ່າມີຄວາມໝາຍແນວໃດສຳລັບທຸກວັນນີ້.

### ແຜນສຳລັບການສອນ

ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ສຳຣວດເບິ່ງຈຳນວນຜູ້ນຳ ແລະຜູ້ຮັບໃຊ້ໃນຄຣິສຕະຈັກຂອງທ່ານ (ສິດຍາພິບານ, ຄຣູສອນພຣະຄັມພີ, ຜູ້ນຳສະຕຣີ, ຄົນລ້ຽງເດັກນ້ອຍ, ແລະຕໍ່ໆໄປ). ຂຽນບັນຊີລາຍລະອຽດວ່າ ມີຜູ້ຊາຍຈັກຄົນແລະມີຜູ້ຍິງຈັກຄົນ. ຜູ້ໃດມີຈຳນວນນ້ອຍຫລາຍກວ່າກັນ. ຖ້າບໍ່ມີສະຕຣີໃນລຳດັບຜູ້ນຳແລ້ວຄຣິສຕະຈັກຂອງທ່ານຈະມີບັນຫາບໍ່?

2. ຄົ້ນຄວ້າເບິ່ງໂອງການຕ່າງໆທີ່ທ່ານຮູ້ດີ (ຄະນະສະຕຣີ, ສະພາຣັຖ, ແລະຕໍ່ໆໄປ). ຂຽນຊື່ອົງການເຫຼົ່ານັ້ນໃສ່ກະດານໄວ້. ເວລານັກຮຽນມາເຖິງແລ້ວ ໃຫ້ພາເຂົາເຈົ້າພິຈາຣະນາເບິ່ງວ່າໂອງການໃດຈະຕາຍ ຫລືອົງການໃດຈະໄປບໍ່ລອດຖ້າຂາດຜູ້ຍິງທີ່ເປັນຜູ້ນຳຢູ່ໃນກຸ່ມນັ້ນໆ.

ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ອະທິບາຍວ່າໃນປະວັດສາດ ຜູ້ຍິງໄດ້ມີພາກສ່ວນສຳຄັນໃນພັນທະກິດຂອງພຣະເຈົ້າ. ເບິ່ງບົດຮຽນສຳລັບມື້ນີ້ ຊຶ່ງມີລາຍຊື່ຂອງຜູ້ນຳຜູ້ຍິງຫລາຍຄົນໃນພຣະຄັມພີເດີມແລະພຣະສັນຍາໃໝ່. ນອກນັ້ນໃຫ້ເວົ້າເຖິງ ລອດຕີ້ ມູນ ແລະສະຕຣີຄົນອື່ນໆທີ່ທ່ານຮູ້ທີ່ໄດ້ຮັບໃຊ້ພຣະເຈົ້າ. ບອກນັກຮຽນວ່າ: ມື້ນີ້ພວກເຮົາຈະຮຽນຮູ້ເຣື່ອງຜູ້ນຳຊຶ່ງເປັນຜູ້ຍິງສອງຄົນໃນພຣະທັມຜູ້ປົກຄອງ.

4. ໃຫ້ຜູ້ນຶ່ງອ່ານ ຜູ້ປົກຄອງ 4:1-3. ຖາມ: ພວກທ່ານເຫັນຫຍັງແດ່ຊຶ່ງເປັນສ່ວນ "ຮອບຂອງຄວາມຜິດບາບ" ໃນພຣະທັມຕອນນີ້ບໍ່? (<u>ຮອບຂອງຄວາມຜິດບາບ</u> ໝາຍເຖິງການປະພຶດແບບຊ້ຳແລ້ວຊ້ຳອີກ ເຊັ່ນຊາວອິສຣາເອັນເຮັດບາບຕໍ່ພຣະເຈົ້າ, ພຣະເຈົ້າລົງໂທດພວກເຂົາ, ອິສຣາເອັນຮ້ອງໃຫ້ຫາພຣະເຈົ້າ, ພຣະເຈົ້າສົ່ງຜູ້ປົກຄອງມາຊ່ວຍພວກເຂົາ, ແຕ່ພໍຜູ້ປົກຄອງຕາຍຊາວອິສຣາເອັນກໍເຮັດບາບຕໍ່ພຣະເຈົ້າຄືນອີກ).

5. ຈັດຕຽມຫລາຍໆຄົນເພື່ອຊ່ວຍກັນອ່ານພຣະທັມຕໍ່ໄປນີ້ 4:4; 4:8-9; 4:14;5:7. ຂໍໃຫ້ນັກຮຽນຕັ້ງໃຈຟັງເບິ່ງພາກສ່ວນຂອງນາງເດໂບຣາໃນປະວັດສາດຂອງໄພ່ພົນຂອງພຣະເຈົ້າ. ເວລາອ່ານໃຫ້ນັກຮຽນຜູ້ທີ່ໄດ້ເຫັນການກະທຳຂອງເດໂບຣາຊີ້ມືຂຶ້ນ. ໃຫ້ທ່ານຂຽນສິ່ງທີ່ເຂົາເຈົ້າພົບໃສ່ກະດານໄວ້ (ຢ່າລືມໃນກະດານໃຫ້ມີ: ຜູ້ປະກາດ

ພຣະທັມ, ຜູ້ປົກຄອງ, ຜູ້ນຳ, ພັລຍາ, ແມ່ທັບຂອງທະຫານ 10,000 ຄົນ, ແລະແມ່ພິມຂອງຊາດອິສຣາເອັນ).

6. ໃຫ້ນັກຮຽນແຕ່ລະຄົນອ່ານແບບງຽບໆເພື່ອຕົວເອງ 4:8-9.
   <u>ຄຳຖາມ:</u>
   - ມີໃຜແດ່ທີ່ຄິດວ່າພຣະເຈົ້າຊົງເລືອກນາງເດໂບຣາໃຫ້ເປັນຜູ້ລອງ ໃນການນຳພາກອງທັບອິສຣາເອັນ?
   - ເປັນຫຍັງບາຫລັກຈຶ່ງບໍ່ຍອມໄປ ຖ້ານາງເດໂບຣາບໍ່ໄປດ້ວຍ?

7. ໃຫ້ຜູ້ນຶ່ງອ່ານ 4:9; 4:17-23; 5:24-27. ຫລັງຈາກອ່ານແລ້ວໃຫ້ຖາມວ່າ: ພວກເຮົາຮູ້ຫຍັງແດ່ກ່ຽວກັບນາງຊາເອນໃນພຣະທັມຕອນນີ້? ຂຽນຄຳຕອບໃສ່ກະດານ.

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ໃນທຸກຍຸກສມັຍ, ພຣະເຈົ້າໄດ້ຊົງເອີ້ນທັງຜູ້ຊາຍແລະຜູ້ຍິງໃຫ້ໄປຮັບໃຊ້. ຜູ້ທີ່ຈະໄປຮຽນໃນໂຮງຮຽນພຣະທັມ ຫລືໄປຮັບໃຊ້ຈະຕ້ອງໄດ້ຮັບການເຫັນພ້ອມ ແລະການສນັບສນູນຈາກຄຣິສຕະຈັກທີ່ຕົນສັງກັດຢູ່. ຖາມ: ທ່ານຈະອະທິຖານ ຫລືໜູນໃຈພວກນັກຮຽນຫລືພວກຜູ້ຮັບໃຊ້ນີ້ວິທີໃດ? ການອະທິຖານ ຫລືການໜູນໃຈຂອງທ່ານ ຈະແຕກຕ່າງກັນບໍ່ ສຳລັບຜູ້ຊາຍແລະຜູ້ຍິງ? ໃຫ້ເວລາຕອບຫລືໃຫ້ຄວາມເຫັນ.

9. ປິດການສຶກສາພຣະທັມດ້ວຍການອະທິຖານຂໍການນຳພາຈາກພຣະເຈົ້າໂດຍສເພາະແມ່ນເຣື່ອງວິທີໜູນໃຈຜູ້ຍິງໃຫ້ໄປຮັບໃຊ້. ໃຫ້ຜູ້ນຶ່ງອະທິຖານເພື່ອຜູ້ຍິງທີ່ຮັບໃຊ້ຢູ່ໃນຄຣິສຕະຈັກຂອງທ່ານ ແລະເພື່ອຊາວໜຸ່ມຍິງທີ່ພຣະເຈົ້າໄດ້ເອີ້ນໃຫ້ອອກໄປຮັບໃຊ້ເຕັມເວລາ.

ສຈ. ດຣ. ສິດນີ ຄານ

# ບົດແນະນຳສຳລັບຄຣູສອນ
## ບົດຮຽນທີ 9
## ກີເດໂອນ-ຕໍ່ສູ້ກັບຄວາມບໍ່ແນ່ໃຈ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພວກຜູ້ປົກຄອງ 6: 7-18, 21-22, 36-40
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ພວກຜູ້ປົກຄອງ 6
ຈຸດສຳຄັນຂອງບົດຮຽນນີ້: ສັດຊື່ຕໍ່ພຣະເຈົ້າໝາຍເຖິງການຍອມຮັບການຊີ້ນຳພາ.
ຄຳຖາມເພື່ອການສຳຣວດ: ພວກເຮົາສາມາດໝັ້ນໃຈໄດ້ບໍ່ວ່າເຮົາເຮັດໃນສິ່ງທີ່ພຣະເຈົ້າຊີ້ໃຫ້ເຮັດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຊອກຫາວິທີທີ່ພວກເຮົາຈະສາມາດຮັບການຊີ້ນຳໃນຊີວິດ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.

## ແຜນສຳລັບການສອນ

ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ເລືອກຈຸດເດີນທາງບ່ອນນຶ່ງທີ່ທ່ານອາດຈະໄປ (ເມືອງໃກ້ຄຽງ ຫລືຖນົນໃນເມືອງຂອງທ່ານເອງ). ຖາມ: ຖ້າພວກເຮົາຈະຂັບຣົດໄປຍັງຈຸດນີ້, ພວກເຮົາມີຫຍັງແດ່ທີ່ຈະຊ່ວຍໃຫ້ເດີນທາງໄປເຖິງຈຸດໝາຍປາຍທາງ? ຟັງເບິ່ງຄຳຕອບ.
2. ຖາມ: ພວກເຮົາມັກໃຊ້ສິ່ງຊ່ວຍເຫລືອ (ແຜນທີ່, ເຂັມຊີ້ທິດ, ຄອມພິວເຕີ້) ທີ່ມີໃຫ້ບໍ່? ຖາມ: ຖ້າພວກເຮົາໄປຕາມຄຳແນະນຳທຸກຢ່າງ ຜົນສຸດທ້າຍຈະເປັນແນວໃດ? ແຕ່ຖ້າເຮົາບໍ່ໄປຕາມຄຳແນະນຳ ຜົນສຸດທ້າຍຈະເປັນແນວໃດ?

ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ບອກນັກຮຽນວ່າ: ບົດຮຽນມື້ນີ້ຈະເວົ້າເຖິງຄົນຜູ້ນຶ່ງທີ່ໄດ້ຮັບການຊົງເອີ້ນຈາກພຣະເຈົ້າ ແລະຄວາມພຍາຍາມຂອງລາວ ທີ່ຢາກຈະຮູ້ຢ່າງແນ່ນອນຈາກພຣະເຈົ້າ.

4. ທົບທວນເບິ່ງ "ຮອບຂອງຄວາມຜິດບາບ" (ຊາວອິສຣາເອນ ເຮັດບາບຕໍ່ພຣະເຈົ້າ, ພຣະເຈົ້າລົງໂທດພວກເຂົາ, ອິສຣາເອນຮ້ອງໃຫ້ຫາພຣະເຈົ້າ, ພຣະເຈົ້າສົ່ງຜູ້ປົກຄອງມາຊ່ວຍພວກເຂົາ, ແຕ່ພໍຜູ້ປົກຄອງຕາຍຊາວອິສຣາເອນກໍເຮັດບາບຕໍ່ພຣະເຈົ້າຄືນອີກ). ໃຫ້ຜູ້ນຶ່ງອ່ານ ຜູ້ປົກຄອງ 6: 1-6. ຊີ້ໃຫ້ນັກຮຽນເບິ່ງພາກສ່ວນຂອງ "ຮອບຂອງຄວາມຜິດບາບ" ໃນພຣະທັມຕອນນີ້. ຂຽນໃສ່ໄວ້ໃນກະດານ.

5. ໃຫ້ນັກຮຽນຜູ້ນຶ່ງອ່ານ 6:7-10; ໃຫ້ອີກຜູ້ນຶ່ງອ່ານ 6:11-18.
   ກ. ອະທິບາຍຄວາມສຳຄັນວ່າເປັນຫຍັງ ກີເດໂອນຈຶ່ງລີ້ຢູ່ຫລັງບ່ອນບີບນ້ຳອະງຸ່ນ ແລະຄຳທັກທາຍຂອງທູດ

ຂອງພຣະເຈົ້າໃນຂໍ້ 12.

ຂ. ຊີ້ໃຫ້ເຫັນການປ່ຽນແປງເວລາກ່າວເຖິງພຣະເຈົ້າໃນຂໍ້ 11,14, ແລະ 20.

ຄ. ພຣະທັມຂອງພຣະເຈົ້າບອກວ່າ "ອິສຣາເອນບໍ່ໄດ້ເຊື່ອຟັງເຮົາ (ພຣະເຈົ້າ)."

(1) ຖາມ: ຂໍ້ນີ້ແມ່ນພາກສ່ວນຕອນໃດຂອງ "ຮອບຂອງຄວາມຜິດບາບ"?

(2) ບອກນັກຮຽນວ່າ: ມີຈັກເທື່ອທີ່ພຣະເຈົ້າພຍາຍາມເວົ້າກັບທ່ານ ແລະທ່ານບໍ່ໄດ້ຍິນພຣະເຈົ້າ ຫລືຮູ້ແລ້ວຕ່າວພາໂລພຣະເຈົ້າ. ແມ່ນຫຍັງເກີດຂຶ້ນ? ທ່ານໄດ້ເຫັນຄຣິສຕະຈັກຂອງພຣະເຈົ້າເຮັດແນວນັ້ນບໍ່? (ຢ່າລືມວ່າທ່ານກໍເປັນສ່ວນນຶ່ງຂອງຄຣິສຕະຈັກ).

ງ. ເບິ່ງ 6:14-17. ຖາມ: ທ່ານຄິດວ່າເປັນຫຍັງພຣະເຈົ້າຈຶ່ງຊົງເອີ້ນເອົາກີເດໂອນ? (ຕຽມພ້ອມ; ພຣະອົງຮູ້ຈິດໃຈລາວ)

6. ບອກນັກຮຽນວ່າ ກີເດໂອນ ໄດ້ຂໍເບິ່ງນິມິດໝາຍ ຫລືການເປີດເຜີຍເຖິງສອງຄັ້ງໃນ 6: 36-40.

ກ. ອະທິບາຍນິມິດ ໝາຍທັງສອງຢ່າງທີ່ກີເດໂອນຮ້ອງຂໍ ແລະເບິ່ງຄຳຕອບຮັບຂອງເຂົາຫລັງຈາກເຫັນນິມິດແລ້ວ.

ຂ. ໃຫ້ນັກຮຽນຍົກມືອອກສຽງຕໍ່ຄຳຖາມ: ມີຈັກຄົນຄິດວ່າເປັນການດີທີ່ກີເດໂອນສແວງຫານິມິດໝາຍ? ມີຈັກຄົນຄິດວ່າການສແວງຫານິມິດໝາຍຂອງກີເດໂອເປັນເຣື່ອງບໍ່ດີ? ຜູ້ທີ່ຄິດວ່າເປັນການດີໃຫ້ຕອບວ່າ ເພາະຫຍັງ? ຜູ້ທີ່ຄິດວ່າເປັນການບໍ່ດີໃຫ້ຕອບວ່າ ເພາະຫຍັງ? ໃຫ້ເວລາເພື່ອການໂຕ້ຕອບ ແລະແລກປ່ຽນຄວາມຄິດເຫັນ.

ຄ. ຖາມ: ທ່ານເຄີຍຄິດບໍ່ວ່າ ຖ້າມີສະຖານະການບາງຢ່າງເກີດຂຶ້ນ ທ່ານຈະເຮັດຫລືຈະບໍ່ເຮັດສິ່ງໃດສິ່ງນຶ່ງ, ແລະ ເຄີຍຄິດບໍ່ວ່າສະຖານະການນັ້ນຄືນິມິໝາຍຈາກພຣະເຈົ້າ?

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

7. ຖາມ: ພວກເຮົາຈະແນ່ໃຈໄດ້ຢ່າງໃດວ່າເຮົາເຮັດໃນສິ່ງທີ່ພຣະເຈົ້າຊົງໃຫ້ເຮົາເຮັດ? ໃຫ້ເວລາຕອບ.

8. ພານັກຮຽນໃຫ້ສງົບຈິດໃຈ ແລະໃຫ້ພິຈາຣະນາເບິ່ງຊີວິດຂອງຕົນເອງ. ສຳລັບຜູ້ທີ່ຮູ້ໃນໃຈວ່າພຣະເຈົ້າຊົງໄດ້ໃຫ້ທິດທາງໃນຊີວິດແລ້ວ ແຕ່ຍັງບໍ່ໄດ້ເຮັດຕາມການຊົງນຳພານັ້ນເທື່ອ. ເຊີນເຂົາເຈົ້າໃຫ້ເຊື່ອຟັງການນຳພາຂອງພຣະເຈົ້າ. ໃຫ້ເວລາກັບບາງຄົນເພື່ອການແບ່ງປັນປະສົບການສ່ວນຕົວກັບເພື່ອນນັກຮຽນ.

ສຈ. ດຣ. ສິດນີ ຄານ

# ບົດແນະນຳສຳລັບຄຣູສອນ
# ບົດຮຽນທີ 10
# ກິເດໂອນ-ເພິ່ງພຣະເຈົ້າ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພວກຜູ້ປົກຄອງ 7:2-8, 16-21

ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ພວກຜູ້ປົກຄອງ 7

ຈຸດສຳຄັນຂອງບົດຮຽນນີ້: ພຣະເຈົ້າຊົງເອີ້ນພວກເຮົາໃຫ້ເພິ່ງພຣະອົງໃນທຸກຢ່າງ.

ຄຳຖາມເພື່ອການສຳຣວດ: ພວກເຮົາຈະສາມາດເພິ່ງພຣະເຈົ້າທັງໝົດໄດ້ແນວໃດ ຖ້າໃນຂະນະດຽວກັນເຮົາພຍາຍາມຕັ້ງໃຈໃສ່ໃນສິ່ງທີ່ເຫັນວ່າຄວນຈະເຮັດເອງໄດ້?

ຈຸດປະສົງຂອງບົດຮຽນນີ້: ເພື່ອອະທິບາຍວິທີ ທີ່ພວກເຮົາຈະສາມາດເພິ່ງພຣະເຈົ້າໄດ້ທັງໝົດ ຖ້າມກາງໂລກທີ່ກຳລັງບອກພວກເຮົາວ່າ "ຕົນນັ້ນແລ ເປັນທີ່ເພິ່ງຂອງຕົນ."

## ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຂຽນຈຸດສຳຄັນຂອງບົດຮຽນນີ້ໃສ່ກະດານ: "ພຣະເຈົ້າຊົງເອີ້ນພວກເຮົາໃຫ້ເພິ່ງພຣະອົງໃນທຸກຢ່າງ." ຈາກຂໍ້ຄວາມນີ້ໃຫ້ຕັ້ງຄຳຖາມວ່າ: ພວກເຮົາຈະຕອບການຊົງເອີ້ນນີ້ເຖິງຂນາດໃດ? ເປັນຫຍັງບາງຄັ້ງພວກເຮົາມີບັນຫາໃນການຕອບການຊົງເອີ້ນ? ທ່ານສາມາດໃຫ້ຕົວຢ່າງໃນຊີວິດຂອງທ່ານ ຫລືຊີວິດຂອງຜູ້ໃດຜູ້ນຶ່ງທີ່ໄດ້ເພິ່ງພຣະເຈົ້າໃນທຸກຢ່າງບໍ່? (ທ່ານອາດຈະຊອກຜູ້ນຶ່ງໄວ້ ກ່ອນມື້ຮຽນບົດຮຽນນີ້).

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ບອກນັກຮຽນວ່າ ມື້ນີ້ພວກເຮົາຈະຮຽນເຣື່ອງຂອງກິເດໂອນຕໍ່. ກິເດໂອນໄດ້ພົບວິທີທາງຂອງພຣະເຈົ້າ ແລະໄດ້ເຊື່ອວາງໃຈໃນພຣະອົງ (ຖ້າທ່ານມີບົດຮຽນທີ່ຜ່ານມາ, ທ່ານອາດຈະເລົ່າຈຸດໃຫຍ່ໆໃຫ້ພວກນັກຮຽນຟັງ ໂດຍສະເພາະເຣື່ອງ "ຮອບຂອງຄວາມຜິດບາບ").

3. ໃຫ້ຜູ້ນຶ່ງອ່ານ 7:1-8, 12. ຖາມ: ຄວາມຄິດແນວໃດໃນພຣະທັມຕອນນີ້ທີ່ທ່ານເຫັນວ່າຜິດກັບທັສນະທັມມະດາ? (ໃຫຍ່ກວ່າບໍ່ແມ່ນວ່າຈະດີກວ່າເລື້ອຍໄປ; ຜ່ອນກຳລັງທະຫານທັ້ງໆທີ່ຮູ້ວ່າກຳລັງສັດຕຣູມີຫລາຍກວ່າ). ບອກນັກຮຽນວ່າ ພຣະເຈົ້າຢາກໃຫ້ທຸກຄົນຮູ້ວ່າພຣະອົງເທົ່ານັ້ນເປັນຜູ້ເຮັດໃຫ້ມີຊັຍຊະນະ.

4. ສລູບເຣື່ອງໃນ 7:9-15. ສັງເກດ: ພຣະເຈົ້າໄດ້ຊົງເປີດເຜີຍພຣະປະສົງໃຫ້ກັບຄົນ ຜູ້ທີ່ພຣະອົງບໍ່ໄດ້ "ຊົງເລືອກ."

ຖາມ:

ກ. ທ່ານເຫັນຫຍັງໃນພຣະທັມຕອນນີ້ຊຶ່ງເປັນນິມິດໝາຍອີກອັນນຶ່ງສຳລັບກິເດໂອນ? (ໄດ້ຍິນການເລົ່າຄວາມຝັນ).

ຂ. ນິມິດໝາຍນີ້ຊ່ວຍກິເດໂອນແນວໃດແດ່? (ເຮັດໃຫ້ເຂັ້ມແຂງ, 7:1; ລາວນະມັສການພຣະເຈົ້າ7:15; ລາວໄດ້ກາຍເປັນຜູ້ນຳທີ່ເອົາຈິງເອົາຈັງ, 7:15)

5. ສລູບຄຳອະທິບາຍໃນບົດຮຽນສຳລັບຫົວຂໍ້ "ຊັຍຊະນະຜ່ານຄົນຈຳນວນນ້ອຍ (7:16-21)," ໂດຍການໃຊ້ຄຳຂວັນໃນສນາມຣົບທີ່ວ່າ "ດາບເພື່ອພຣະເຈົ້າແລະເພື່ອກິເດໂອນ."

6. ສລູບ ຜູ້ປົກຄອງ 7:16-25. ຖາມ: ທ່ານຄິດວ່າທະຫານ 300 ຄົນພາກັນຄິດແນວໃດ? (ຢ້ານ, ສົງສັຍ, ບໍ່ແນ່ໃຈ, ເດັດດ່ຽວ, ໝັ້ນໃຈ). ທ່ານເຄີຍມີຄວາມຮູ້ສຶກແນວນັ້ນບໍ່ ໃນການດຳເນີນຊີວິດຄຣິສຕຽນ?

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

7. ໃຊ້ຄຳຖາມຕໍ່ໄປນີ້ເພື່ອການສົນທະນາ ແລະເພື່ອການນຳບົດຮຽນໄປໃຊ້ໃນຊີວິດ:

- ທ່ານຄິດວ່າ ຄວາມເຊື່ອອັນແທ້ຈິງໃນພຣະເຈົ້າ ແລະການປະທຸກຢ່າງໄວ້ກັບພຣະເຈົ້າ ມີຄວາມແຕກຕ່າງກັນບໍ່? ຖ້າມີ, ແມ່ນຫຍັງ?
- ຖ້າການເພິ່ງພຣະເຈົ້າບໍ່ເປັນເຣື່ອງຈຳເປັນໃນຊີວິດ, ຜູ້ໃດຈະໄດ້ຮັບກຽດໃນເມື່ອມີຄວາມສຳເຣັດ?
- ຖ້າການເພິ່ງພຣະເຈົ້າບໍ່ເປັນເຣື່ອງຈຳເປັນໃນຄຣິສຕະຈັກ, ຜູ້ໃດຈະໄດ້ຮັບກຽດໃນເມື່ອມີຄວາມສຳເຣັດ?
- ທ່ານຮູ້ໄດ້ຢ່າງໃດວ່າ ວຽກທີ່ຄຣິສຕະຈັກກຳລັງເຮັດຈະຕ້ອງໄດ້ເພິ່ງພຣະເຈົ້າ?
- ມີຫຍັງແດ່ທີ່ທ່ານກຳລັງເຮັດ ຕ້ອງອາສັຍກຳລັງມະນຸດຢ່າງດຽວ?
- ວຽກທີ່ຈະຕ້ອງເພິ່ງພຣະເຈົ້າມີລັກສະນະແນວໃດ? (ວຽກໃຫຍ່ເກີນຄວາມສາມາດ ຄືງມີແຕ່ພຣະເຈົ້າເທົ່ານັ້ນທີ່ຈະສາມາດເຮັດໄດ້).
- ທ່ານຮູ້ສຶກແນວໃດເມື່ອພົບກັບງານປະເພດນັ້ນ? (ສົງສັຍ, ບໍ່ໝັ້ນໃຈ, ຄິດບໍ່ເຖິງວ່າຈະເຮັດໄດ້ຢ່າງໃດ).
- ພວກເຮົາຈະສາມາດເພິ່ງພຣະເຈົ້າທັງໝົດໄດ້ແນວໃດ ຖ້າໃນຂະນະດຽວກັນເຮົາພຍາຍາມຕັ້ງໃຈໃສ່ໃນສິ່ງທີ່ເຫັນວ່າຄວນຈະເຮັດເອງໄດ້?

8. ພານັກຮຽນພິຈາຣະນາຄຳຖາມຕໍ່ໄປນີ້ຢ່າງງຽບໆ: ພຣະເຈົ້າຊົງເອີ້ນ...

- ທ່ານໃຫ້ເຮັດໃນສິ່ງທີ່ຄິດວ່າເປັນໄປບໍ່ໄດ້, ຄືງມີແຕ່ພຣະເຈົ້າເທົ່ານັ້ນທີ່ຈະສາມາດເຮັດໄດ້?
- ຄຣິສຕະຈັກຂອງທ່ານໃຫ້ເຮັດໃນສິ່ງທີ່ຄິດວ່າເປັນໄປບໍ່ໄດ້, ຄືງມີແຕ່ພຣະເຈົ້າເທົ່ານັ້ນທີ່ຈະສາມາດເຮັດໄດ້?

9. ນຳພານັກຮຽນອະທິຖານ ຈາກຄຳຕອບທີ່ເຂົາເຈົ້າໄດ້ຕອບໃນຂໍ້ 8. ອ້ອນວອນອອກສຽງຂໍການນຳພາຈາກພຣະເຈົ້າ ແລະຂໍຄວາມເຊື່ອເພື່ອຈະເຮັດໃນສິ່ງທີ່ພຣະເຈົ້າຊົງເອີ້ນໃຫ້ບຸກຄົນ ແລະຄຣິສຕະຈັກເຮັດໃນຕອນນີ້.

## ບົດແນະນຳສຳລັບຄຣູສອນ
## ບົດຮຽນທີ 11
## ຄວາມຜິດພາດຂອງຜູ້ນຳ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພວກຜູ້ປົກຄອງ 6:1--9:15
ຂໍ້ພຣະຄຳທັງຫມົດສຳລັບບົດຮຽນນີ້: ພວກຜູ້ປົກຄອງ 6:1--9:15

### ບົດນຳ

ບໍ່ມີໃຜດອກທີ່ຈະເຮັດຖືກຫມົດທຸກຢ່າງໄດ້ ແມ່ນແຕ່ໃນຄອບຄົວຂອງເຮົາເອງມີນຳກັນບໍ່ເທົ່າໃດກໍຍັງມີການຜິດຖຽງກັນ ລາງເທື່ອຜົວເມັຽເຮັດບໍ່ຖືກໃຈກັນ, ລາງເທື່ອລູກເຮັດບໍ່ຖືກໃຈພໍ່ແມ່ ຫລືພໍ່ແມ່ເຮັດບໍ່ຖືກໃຈລູກ. ຊີວິດການເປັນຜູ້ນຳໃນພຣະເຢຊູຄຣິດກໍຄ້າຍຄື ເກມປິສນາ 1000 ທ່ອນມາຕໍ່ເຂົ້າກັນ (1000 Puzzle) ດ້ວຍວ່າຊີວິດຂອງຄົນທັງຫລາຍສັບສົນແນວນັ້ນ ຜູ້ທີ່ປະກອບເຂົ້າກັນແມ່ນຜູ້ນຳເປັນຜູ້ຕໍ່ກັນໂດຍການຊົງນຳຂອງພຣະວິນຍານບໍຣິສຸດ.

1. ຫາກທ່ານຫາມາໄດ້ໃຫ້ເອົາ 1000 ທ່ອນເກມປິສນາມາຍັງຫ້ອງຮຽນຈັກສອງເກມແລ້ວຖອກປົນກັນ, ແຕ່ລະເກມໃຫ້ລັກເກັບໄວ້ເກມລະ 10 ທ່ອນ ຈາກນັ້ນກໍທ້າທາຍນັກຮຽນໃຫ້ຕໍ່ສອງເກມຊຶ່ງມີ1980 ທ່ອນໃຫ້ແລ້ວກ່ອນຫ້ອງຮຽນປິດໃນມື້ນີ້. ຫລືມອບໃຫ້ຜູ້ໃດຜູ້ນຶ່ງໄປເຮັດຢູ່ບ້ານໃຫ້ແລ້ວພາຍໃນນຶ່ງອາທິດ. (ຫລືຫາກບໍ່ມີເກມນີ້ຈຶ່ງເລົ່າໃຫ້ນັກຮຽນຟັງຕາມເຣື່ອງທີ່ກ່າວມານັ້ນ).

ຄຳຕອບ: ບໍ່ມີໃຜຈະປະກອບເຂົ້າກັນໄດ້ດ້ວຍວ່າ

1. ມີສອງເກມປົນກັນ
2. ເກມບໍ່ຄົບເພາະແຕ່ລະເກມຂາດ 10 ທ່ອນ.

ເຮົາທັງຫລາຍກໍເປັນເຫມືອນເກມສອງເກມນັ້ນແຫລະ, ຊີວິດເຮົາສັບສົນແລ້ວກໍເຂົ້າໂບດຫາພຣະເຈົ້ານັ້ນດີ ແຕ່ເຮົາຍັງເຊື່ອງຄວາມຜິດພາດ10 ເປີເຊັນໄວ້ຢູ່ ດ້ວຍເຫດນີ້ຜູ້ນຳໃນໂບດທີ່ເຮັດວຽກຕາງຫນ້າພຣະເຈົ້າຈຶ່ງແກ້ໄຂບັນຫາເຮົາບໍ່ໄດ້ ດ້ວຍເຫດນີ້ເຮົາທັງຫລາຍຈຶ່ງເຫັນໃຈຜູ້ນຳຂອງພວກເຮົາທີ່ເພິ່ນບໍ່ສາມາດແກ້ບັນຫາຄົນໃນໂບດໄດ້.

2. ປະຫວັດການ ຊົງເລືອກກິເດໂອນ 6:1-40

1. ພວກເມດີອານຂົ່ມເຫງອິສຣາເອນເປັນເວລາ 7 ປີ ດັ່ງນັ້ນອິສຣາເອນຈຶ່ງອ້ອນວອນຕໍ່ພຣະເຈົ້າ (ຂໍ້ 7)
2. ພຣະເຈົ້າສົ່ງເທວະດາມາເວົ້າກັບ ກິເດໂອນໃຫ້ໄປຊ່ອຍອິສຣາເອນ (ຂໍ້ 11-14).
3. ຄຳສາຣະພາບຂອງກິເດໂອນ ຂໍ້ 15
   ກ. ເຊື້ອສາຍອ່ອນແອ.
   ຂ. ບໍ່ແມ່ນຄົນສຳຄັນໃນຄອບຄົວ.
4. ກິເດໂອນ ນຳເຄື່ອງຖວາຍມາຖວາຍດ້ວຍວ່າເພິ່ນຖືກເລືອກຈາກພຣະເຈົ້າ (ຂໍ້ 18-21).
5. ຫລັງຈາກກິເດໂອນຮັບການຊົງເອີ້ນຂອງພຣະເຈົ້າແລ້ວເພິ່ນທຳລາຍແທ່ນບູຊາພຣະບາອານ ແລະສ້າງແທນບູຊາພຣະຜູ້ເປັນເຈົ້າ (ຂໍ້ 25-30).
6. ກິເດໂອນນຳທະຫານໂຈມຕີແລະຊະນະພວກມາດີອານ (ບົດ 7)
7. ສລູບຊີວິດຕອນຕົ້ນຂອງກິເດໂອນ. ເພິ່ນເປັນຄົນອ່ອນແອແລະຂາດຄວາມສຳຄັນ ແຕ່ພຣະເຈົ້າເລືອກແລະເຮັດໃຫ້ເພິ່ນເປັນຄົນເຂັ້ມແຂງ ແລະເປັນຄົນສຳຄັນ ຈົນກາຍເປັນເຈົ້າຊີວິດຂອງຊາດອິສຣາເອນ. ສອນໃຫ້ເຮົາຮູ້ວ່າຄວາມອ່ອນແອຫລືຄວາມເຂັ້ມແຂງຂອງເຮົາບໍ່ສຳຄັນ ຫາກພຣະເຈົ້າຊົງເລືອກເຮົາແລະເຮົາພ້ອມທີ່ຈະຕອບສນອງ

ຄຳຮຽກເອີ້ນຂອງພຣະອົງ   ພຣະອົງກໍຈະປ່ຽນແປງເຮົາ.

## ການຜິດພາດຂອງກີເດໂອນ 8:22-28

ກ. ອິສຣາເອນໄດ້ຮ້ອງຂໍໃຫ້ກີເດໂອນເປັນເຈົ້າຊີວິດພວກເຂົາ (ຂໍ້ 22)

ຂ. ກີເດໂອນຖ່ອມຕົວ ໂດຍກ່າວວ່າ "ແມ່ນພຣະຜູ້ເປັນເຈົ້າເປັນຜູ້ຄຸ້ມຄອງພວກເຈົ້າ (ຂໍ້ 23)

ຄ. ກີເດໂອນເອົາຕຸ້ມຫູຄຳຈຳນວນພັນເຈັດຮ້ອຍບາດມາຫລໍ່ເປັນຮູບເຄື່ອງນຸ່ງຂອງປະໂລຫິດ (ຂໍ້ 26-27) ເຄື່ອງດັ່ງກ່າວຮ້ອງວ່າ ອີຟອດ ຊຶ່ງເປັນເຄື່ອງທີ່ປະໂລຫິດນຸ່ງເວລາເພິ່ນຖວາຍບູຊາພຣະເຈົ້າ, ເພິ່ນມີຄວາມຕັ້ງໃຈວ່າໃຫ້ປະຊົນ ອິສຣາເອນໄດ້ຈາຣຶກເຖິງພຣະຄຸນພຣະເຈົ້າໂດຍສ້າງເຄື່ອງອີຟອດຄຳນີ້ຕັ້ງໄວ້ທີ່ກາງເມືອງ.

ງ. ອິສຣາເອນບໍ່ໄດ້ເບິ່ງຮູບເຄື່ອງອີຟອດເປັນທີ່ຈາຣຶກ ແຕ່ກັບໄປຂາບໄຫວ້ເຄື່ອງນັ້ນດ້ວຍເຫດນີ້ໃນຂໍ້ 27 ຈຶ່ງບອກວ່າການກະທຳຂອງກີເດໂອນເປັນບ້ວງແຮ້ວສັບລັບກີເດໂອນແລະຄອບຄົວ.

## ອາບີມາເລັກຜູ້ນຳບໍ່ດີ 8:29--9:15

ກ. ຫລັງຈາກກີເດໂອນເຖົ້າແກ່ແລະເສັຽຊີວິດ ລູກຊາຍທັງເຈັດສິບຄົນບໍ່ມີໃຜຂຶ້ນເປັນເຈົ້າຊີວິດແທນເພິ່ນ ແລະພວກອິສຣາເອນທີ່ເຄີຽຮ້ອງຂໍກີເດໂອນແລະພວກລູກຊາຍທັງເຈັດສິບຄົນມາເປັນຜູ້ນຳໃນ ຂໍ້ 22 ກໍບໍ່ນັບຖືລູກຊາຍທັງເຈັດສິບຄົນ (8:29-35).

ຂ. ເປຣຸບບາອານເປັນຊື່ນ້ອຍຂອງກີເດໂອນ (9:1).

ຄ. ມີອີກຜູ້ນຶ່ງຊື່ອາບີມາເລັກເປັນລູກຊາຍຂອງກີເດໂອນກັບສາວໃຊ້ທີ່ເມືອງຊີເຄມໄດ້ລຸກຢືນຂຶ້ນຫາສຽງໃຫ້ຊາວຊີເຄມເລືອກເປັນເຈົ້າຊີວິດ ດ້ວຍວ່າລາວເປັນລູກຂອງເຈົ້າຊີວິດກີເດໂອນ ແລະເປັນຊາວຊີເຄມ ຈຶ່ງຍົວະໃຫ້ຊາວຊີເຄມເລືອກເອົາລາວໂດຍກ່າວວ່າ ຂ້ອຍກໍເປັນເນື້ອຫນັງ ແລະກ້ອນເລືອດຂອງພວກເຈົ້າ (9: 2).

ງ. ນີ້ແຫລະແມ່ນບ້ວງແຮ້ວຂອງກີເດໂອນທີ່ກ່າວມາແລ້ວ (8:27).

ຈ. ຫລັງຈາກອາບີມາເລັກຖືກເລືອກໃຫ້ເປັນຜູ້ນຳແລ້ວກໍເລີ້ມເຮັດຊົ່ວຄືເອົາເງິນຈາກວິຫານໄປຈ້າງນັກເລງຂ້າອ້າຍທັງເຈັດສິບຄົນ ແຕ່ມີນ້ອງຊາຍຫລ້າຊື່ໂຢທາມລອດໄປໄດ້ (ຂໍ້ 3- 6).

ສ. ໂຢທາມປະກາດຄວາມຊົ່ວຂອງອາບີມາເລັກ ຂໍ້ 7-21.

ຊ. ອາບີມາເລັກຜູ້ນຳຊົ່ວປົກຄອງເປັນເວລສາມປີ (ຂໍ້ 22).

ສລູບເຣື່ອງແມ່ນກີເດໂອນເຮັດຜິດທີ່ໄດ້ສ້າງຮູບອີຟອດເພື່ອໃຫ້ປະຊາຊົນຈາຣຶກເຖິງພຣະຄຸນພຣະເຈົ້າ ແຕ່ເຂົາກັບຂາບໄຫວຮູບນັ້ນ,   ສິ່ງທີ່ກີເດໂອນເຮັດຜິດອີກຄືເພິ່ນບໍ່ຫ້າມເຂົາເມື່ອເຂົາຂາບໄຫວ້. ເຣື່ອງນີ້ສອນໃຫ້ເຮົາຮູ້ວ່າຫາກເຮົາບໍ່ເຂົ້າໃຈນ້ຳພຣະທັຍພຣະເຈົ້າເຮົາກໍອາຈເຮັດຜິດໂດຍບໍ່ເຈຕະນາ   ເຫມືອນດັ່ງກີເດໂອນ ແລະໃນທີ່ສຸດກໍກາຍເປັນບ້ວງແຮ້ວມັດເຮົາເອງ.

ສຈ. ດຣ. ທູນພັນ ວົງສຸຣິດທ໌

# ບົດແນະນຳສຳລັບຄຣູສອນ
# ບົດຮຽນທີ 12
# ແຊມຊັນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພວກຜູ້ປົກຄອງ 13:1-7; 16:18-30
ຂໍ້ພຣະຄຳທັງໝົດສຳລັບບົດຮຽນນີ້: ພວກຜູ້ປົກຄອງ 13--18
ຈຸດສຳຄັນຂອງບົດຮຽນນີ້: ສອນເຮົາໃຫ້ກັບໃນໃຈຍາມຜິດພາດ
ຄຳຖາມເພື່ອການສຳຣວດ: ເຮົາຈະຮູ້ໄດ້ຢ່າງໃດວ່າເຮົາເຮັດຜິດ
ຈຸດປະສົງຂອງບົດຮຽນນີ້: ເພື່ອສິກສາຣຽນຮູ້ວ່າຈະເຮັດແນວໃດຈຶ່ງຈະບໍ່ເຮັດເສັຽຫາຍ

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ພຣະເຈົ້າຊົງສ້າງມນຸດທຸກຄົນຄ້າຍຄືພຣະອົງ
- ເພື່ອເຮັດພາຣະກິດຊ່ວຍເຫລືອຜູ້ເຈັບເປັນ, ຜູ້ຕ້ອງການພຣະເຈົ້າ, ແລະຜູ້ມີຄວາມລຳບາກອື່ນໆ
- ເພື່ອຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີ

## ບົດນຳ

ເຣື່ອງຂອງແຊມຊັນຜູ້ນຳອິສຣາເອນຜູ້ສຸດທ້າຍເປັນເຣື່ອງສັ້ນ ແຕ່ບົດຮຽນວັນນີ້ຈະຍາວເນື່ອງຈາກວ່າບົດຮຽນວັນນີ້ຈະ ເວົ້າເລີ້ມແຕ່ແຊມຊັນຢູ່ໃນທ້ອງແມ່ຈົນຮອດມື້ລາວຕາຍ. ແຊມຊັນລົງມາເກີດກ່ອນໜ້າ ຄ.ສ 1100 ເພື່ອມາຊ່ວຍອິສຣາເອນໃຫ້ພົ້ນຈາກການກົດຂີ່ຂົ່ມເຫງຂອງພວກຟີລິສຕິນ. ເທວະດາຂອງອົງພຣະຜູ້ເປັນເຈົ້າໄດ້ລົງມາບອກແມ່ຂອງແຊມຊັນຜູ້ເປັນຍິງໝັນວ່າລາວຈະມີລູກຊາຍ ແລະເດັກນ້ອຍຜູ້ນີ້ຕ້ອງລ້ຽງແບບພິເສດ, ສິ່ງສຳຄັນທີ່ສຸດຫ້າມຕັດຜົມໃຫ້ລາວ.

ອ່ານພວກຜູ້ປົກຄອງ 13:1-24 ສິ່ງບໍ່ຄາດຫວັງ

1. ພວກອິສຣາເອນເຮັດບາບພຣະເຈົ້າຈຶ່ງປ່ອຍໃຫ້ພວກຟີລິສຕິນຂົ່ມເຫງ 40 ປີ.
2. ພຣະເຈົ້າຟັງສຽງຄຳອ້ອນວອນຂອງຄົນສິລທັມຈຶ່ງສົ່ງແຊມຊັນມາເກີດ.
3. ຍິງໝັນບໍ່ເຄີຽຄິດວ່າຈະມີລູກຈະໄດ້ລູກຊາຍ ແລະເມື່ອໃຫຍ່ມາຈະເປັນຜູ້ຊ່ອຍອິສຣາເອນ (ຂໍ້ 4)
4. ທ່ານມາໂນອາພໍ່ຂອງແຊມຊັນອ້ອນວອນຂໍເຫັນນິມິດໃນສິ່ງທີ່ເມັຽມາເວົ້າສູ່ຟັງ ( ຂໍ້ 8).
5. ພຣະເຈົ້າຕອບຄຳອ້ອນວອນຂອງທ່ານມາໂນອາ (ຂໍ້ 9-10).
6. ທ່ານມາໂນອາ ຖວາຍຂອບພຣະຄຸນ (ຂໍ້ 20-21).
7. ແຊມຊັນເກີດຈາກຍິງໝັນ ແລ້ວພຣະເຈົ້າກໍອວຍພອນ (ຂໍ້ 24).

ອ່ານ ພວກຜູ້ປົກຄອງ 14:1--16:3

1. ແຊມຊັນຢາກໄດ້ເມັຽລູກສາວພວກຟີລິສຕິນ ແມ່ນແຜນການພຣະເຈົ້າເລີ້ມຕົ້ນ.
2. ແຊມຊັນຈີກສິງໜຸ່ມໝາຍຄວາມວ່າສິງມີແຮງ ແຕ່ຖືກຈີກດ້ວຍຝ່າມືເປົ່າຂອງແຊມຊັນ (ຂໍ້ 5-6)
3. ຮັງເຜິ້ງໃນຊາກສິບກໍເປັນໄປຕາມແຜນ (ຂໍ້ 8-9)
4. ຄຳທວາຍຂອງແຊມຊັນມາຈາກສິງທີ່ລາວຈີກ ແລະນຳເຜິ້ງໃນຕົວສິງ (ຂໍ້ 14)
5. ຊາຍໜຸ່ມສາມສິບຄົນແມ່ນໝູ່ຂອງເມັຍແຊມຊັນຈຶ່ງໄດ້ມາໃນງານລ້ຽງ (Party).
6. ເຂົາຕອບຄຳທວາຍຂອງແຊມຊັນບໍ່ໄດ້ຈຶ່ງພາກັນໄປຂູ່ເຂັນເມັຽແຊມຊັນ
7. ເມັຽຂອງແຊມຊັນຮັກພໍ່ຈຶ່ງຫາທາງໃຫ້ຜົວບອກຄວາມລັບ ເພື່ອຈະບອກພວກທີ່ຂູ່ເຂັນນາງ.
8. ແຊມຊັນຮັກເມັຽ ທົນເບິ່ງເມັຽໂສກເສົ້າບໍ່ໄດ້ຈຶ່ງບອກຄຳຕອບໃຫ້ນາງ ແລະຄຳຕອບນັ້ນກໍໄປເຖິງພວກສາມສິບຄົນ.
9. ແຊມຊັ້ນຂ້າເຂົາທັງສາມສິບຄົນ ແລ້ວກັບໄປບ້ານພໍ່ ແລະພໍ່ເມັຽກໍຍົກເມັຽລາວໃຫ້ຊາຍອື່ນ. (ຂໍ້ 18)
10. ແຊມຊັນໄປຢາມເມັຽພໍ່ເມັຽບໍ່ອະນຸຍາດ ຈຶ່ງໃຈຮ້າຍໄປຈູດເຝົາໄຮ່ນາຂອງຟີລິສຕິນດ້ວຍມັດກະບອງໃສ່ຫາງໝາ (15:4-5).
11. ພວກຟີລິສຕິນຕາມລ່າໄປເຖິງແຂວງຢູດາຍ, ແລ້ວພວກຢູດາຍຢ້ານຟີລິສຕິນຈຶ່ງໄປຮ້ອງຂໍຈັບເອົາແຊມຊັນ.
12. ແຊມຊັນເສັຽໃຈທີ່ເສັຽເມັຽກໍກາຍເປັນຄົນກິນເຫລົ້າເຂົ້າບາ ຕົກຂຸມຮັກກັບໂສເພນີຊື່ ເດລີລາ.
13. ພວກຟີລິສຕິນຈ້າງນາງເດລີລາຫາຄວາມລັບຂອງແຊມຊັນ (16:16-17).

<u>ອ່ານ ພວກຜູ້ປົກຄອງ 16:23-30</u>

1. ແຊມຊັນຕາບອດຢູ່ໃນຄຸກຂອງຟີລິສຕິນເຮັດວຽກຢ່າງໜັກ.
2. ງານສລອງຖວາຍບູຊາພະພວກຟີລິສຕິນ ເອົາແຊມຊັນມາເຢາະເຢີ້ຍ.
3. ແຊມຊັນອ້ອນວອນຂໍກຳລັງຄັ້ງສຸດທ້າຍ (ຂໍ້ 28).
4. ຫໍໂຮງຖືກເຈື່ອນທັບພວກເຈົ້ານາຍຟີລິສຕິນຕາຍໝົດພ້ອມກັບແຊມຊັນ
5. ແຜນການການຊົງໄຖ່ຂອງພຣະເຈົ້າສຳເຣັດ ດ້ວຍວ່າເຈົ້ານາຍຂອງຟີລິສຕິນຕາຍໝົດແລ້ວ.

<u>ຄຳຖາມ:</u>

1. ທ່ານໄດ້ຮຽນຫຍັງຈາກຊີວິດຂອງແຊມຊັນ?

2. ຕໍ່ໄປທ່ານຈະເຮັດຄືແຊມຊັນຢ່າງໃດ? ແລະບໍ່ເຮັດຄືແຊມຊັນຢ່າງໃດ?

ສຈ. ດຣ. ທູນພັນ ວົງສຸຣິດທ໌

## ບົດແນະນຳສຳລັບຄຣູສອນ

## ບົດຮຽນທີ 13

## ແຕກກະຈັດກະຈາຍ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພວກຜູ້ປົກຄອງ 17:1-6; 18:1; 19:1; 20:1-5;

ຂໍ້ພຣະຄຳທັງຫມົດສຳລັບບົດຮຽນນີ້: ພວກຜູ້ປົກຄອງ 17--21

ຈຸດສຳຄັນຂອງບົດຮຽນນີ້: ຄວາມພິນາດເກີດກັບຄົນມີ່ມັກເຮັດຕາມໃຈຕົນເອງ

ຄຳຖາມເພື່ອການສຳຣວດ: ການເຮັດຕາມໃຈຕົນເອງມີຜົນສະທ້ອນຢ່າງໃດ?

ຈຸດປະສົງຂອງບົດຮຽນນີ້: ເພື່ອສິກສາຣຽນຮູ້ວ່າເຮົາອາດຈະຢູ່ໃນຄວມພິນາດຫາກເຮັດຕາມໃຈ

ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

### ບົດນຳ

ເນື່ອງຈາກວ່າບົດຮຽນບົດນີ້ໄດ້ເລົ່າມາແຕ່ບົດ 17 ເຖິງ ບົດ 21 ຈຶ່ງນັບວ່າເປັນບົດຮຽນທີ່ຍາວຫລາຍ ບາງທີທ່ານບໍ່ສາມາດໃຫ້ນັກຮຽນອ່ານພຣະຄັມພີຈົນໝົດທຸກຕອນ ດັ່ງນັ້ນຈຶ່ງຂໍແນະນຳໃຫ້ຄຣູອ່ານລ່ວງໜ້າແລ້ວສລູບເປັນຕອນໆໄປ.

### ສ້າງສາສນາໃນເຮືອນ 17:1-13

1. ມີກາຢ້ານຄຳປ້ອຍຈຶ່ງຕັດສິນໃຈສົ່ງເງິນຄືນໃຫ້ແມ່.
2. ແມ່ຢ້ານລູກຕົນເອງຖືກຄຳປ້ອຍຈຶ່ງສ້າງສາສນາໃນເຮືອນ ໂດຍເອົາເງິນ 200 ຫລຽນໄປເຄືອບພຣະໄມ້
3. ນາງບອກລູກວ່າຈະຖວາຍເງິນທັງໝົດໃຫ້ພຣະເຈົ້າ ແຕ່ໃຫ້ລູກແຕ່ 200 ເພື່ອສ້າງພຣະເງິນ
4. ຄົນເລວີແມ່ນຄົນທີ່ຈັດໄວ້ສຳລັບຮັບໃຊ້ໃນພຣະວິຫານ
5. ມີກາ ຊາຍຜູ້ລັກຄິດວ່າລາວຈະຮັ່ງມີເປັນດີເພາະໄດ້ຄົນເລວີມາເປັນປະໂລຫິດສ່ວນຕົວ.

### ບ່ອນນະມັສການໃຫຍ່ກວ່າ 18:1-31

1. ເຜົ່າດານຊອກຫາດິນແດນເປັນຂອງຕົນ ດ້ວຍວ່າບໍ່ມີກະສັດແບ່ງປັນໃຫ້.
2. ເຂົາຈັບຕາເບິ່ງພຣະເງິນຂອງມີກາ ແລະປະໂລຫິດຂອງມີກາ
3. ເຂົາສືບເບິ່ງເມືອງລາລິດເປັນເມືອງອຸດົມສົມບູນ
4. ເຂົາຍຶດເອົາພຣະແລະປະໂລຫິດຂອງມີກາ
5. ປະໂລຫິດດີໃຈທີ່ໄດ້ເປັນປະໂລຫິດເຜົ່າດານ ດີກວ່າເປັນປະໂລຫິດຂອງຊາຍຄົນດຽວ.

ຊົ່ວຍິ່ງກວ່າສັດ 19:1--20:-48

1.ຄົນເລວີມີເມັຽນ້ອຍ ແລະຜິດກັນ.

2. ນັກເລງຂົ່ມຂືນເມັຽນ້ອຍຂອງຄົນເລວີ

3. ຄົນເລວີ ຕັດຊາກສົບເມັຽເປັນສິບສອງທ່ອນ ແລ້ວສົ່ງໃຫ້ອິສຣາເອນສິບສອງເຜົ່າເປັນການຟ້ອງຮ້ອງທຸກ

4. ອິສຣາເອນຄຽດແຄ້ນພວກນັກເລງເບັນຢາມິນ

5. ອິສຣາເອນຊະນະຊົງຄາມ ເບັນຢາມິນ.

ຫາເມັຽໃຫ້ເຜົ່າເບັນຢາມິນ ບົດ 21

1. ເຜົ່າເບັນຢາມິນແມ່ນເຜົ່ານຶ່ງໃນອິສຣາເອນ ເຊື້ອສາຍຈາກ ຢາໂຄບ ແລະນາງຣາເຊັນ.

2. ພວກເບັນຢາມິນຕາຍໃນສົງຄາມຢ່າງຫລວງຫລາຍ ຈົນອິສຣາເອນຢ້ານເຂົາສູນພັນໄປຈາກເຜົ່າ.

3. ປະຊຸມໃຫຍ່ ຣະວ່າງເຜົ່າຕ່າງໆຂອງອິສຣາເອນ ຫາກເຜົ່າໃດບໍ່ເຂົ້າປະຊຸມຈະຕ້ອງຂ້າຖິ້ມໝົດ

4. ການຕົກລົງໃນກອງປະຊຸມແມ່ນບໍ່ໃຫ້ລູກສາວທຸກເຜົ່າທີ່ເຂົ້າປະຊຸມແຕ່ງງານກັບເຜົ່າເບັນຢາມິນ ເພາະເຂົາຊົ່ວ.

5. ອິສຣາເອນຢ້ານເຜົ່າເບັນຢາມິນສູນພັນຈຶ່ງຊອກຫາວິທີໃຫ້ອອກແມ່ແຜ່ລູກ.

6. ອິສຣາເອນເສັຽໃຈໃຫ້ເຜົ່າເບັນຢາມິນທີ່ເຮັດຊົ່ວແລະຂ້າກັນເອງໃນເຜົ່າຕ່າງໆຂອງອິສຣາເອນ.

ຄຳຖາມ:

1. ມີກາເປັນຄົນເຊື່ອພຣະເຈົ້າຢ່າງໃດ?

2. ຈຸດອ່ອນຂອງປະໂລຫິດທີ່ຢູ່ກັບມີກາມີຫຍັງແດ່?

3. ຊີວິດຂອງປະໂລຫິດຜູ້ນີ້ສອນຫຍັງທ່ານແດ່?

4. ເປັນຫຍັງເຜົ່າດ່ານຈຶ່ງໄປຍາດຊິງເອົາດິນແດນອຸດົມສົມບູນຂອງຜູ້ອື່ນ?

5. ພວກນັກເລງໄດ້ຮັບຊະຕາກັມແນວໃດ?

6. ເປັນຫຍັງຈຶ່ງຮ້ອງວ່າຊົ່ວຍິ່ງກວ່າໝາ?

ສຈ. ດຣ. ທູນພັນ ວົງສຸຣິດທ໌